ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

28 ກໍລະກົດ - 09 ສິງຫາ 2023

ປີທີ 12

ສະບັບທີ 932

ລາຍສັປະດາ

## ກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກກະຊວງອຸດສາຫະກໍາ ແລະ ການຄ້າ ສະໄໝທີ V





(ສພຊ) ກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ກະຊວງອຸດສາຫະກຳ ແລະ ການຄ້າ ສະໄໝທີ V ໄດ້ໄຂຂຶ້ນຢ່າງເປັນທາງການໃນລະຫວ່າງວັນທີ 25-27 ກໍລະກົດ 2023 ທີ່ຫ້ອງປະຊຸມໃຫຍ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ ໂດຍການໃຫ້ກຽດເຂົ້າຮ່ວມຂອງ ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແລະ ສະຫາຍມະໄລທອງ ກົມມະສິດ ກຳມະການສຳຮອງສູນກາງພັກ, ເລຂາຄະນະບໍລິຫານງານພັກກະຊວງ, ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ; ມີບັນດາສະຫາຍຮອງເລຂາຄະນະພັກ, ຄະນະປະຈຳພັກ, ກຳມະການພັກກະຊວງ, ຄະນະບໍລິຫານງານພັກກະຊວງ, ຄະນະໜ່ວຍພັກຫ້ອງການ, ກົມ, ສະຖາບັນ ແລະ ບັນດາໜ່ວຍພັກລັດວິສາຫະກິດ, 3 ອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມທັງໝົດ 111 ສະຫາຍ.

ໃນໂອກາດນີ້, ສະຫາຍມະໄລທອງ ກົມມະສິດ ກຳມະການສຳຮອງສູນກາງພັກ, ເລຂາຄະນະບໍລິຫານງານພັກກະຊວງ, ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ກ່າວເປີດກອງປະຊຸມຄົບຄະນະບໍລິຫານງານພັກກະຊວງ ກາງສະໄໝທີ V ໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວກອງທັບ, ທົ່ວປວງຊົນລາວທັງຊາດ ພາຍໃຕ້ການນຳພາ-ຊີ້ນຳ ຂອງພັກ ກຳລັງຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກຢ່າງຕັ້ງໜ້າ. ໃນນີ້, ກໍໄດ້ຍົກໃຫ້ເຫັນເຖິງຜົນງານພົ້ນເດັ່ນໃນທົ່ວຂະແໜງການອຸດສາຫະກຳ ແລະ ການຄ້າ ທີ່ໄດ້ຊຸ້ມຊ້ອງຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄະນະບໍລິຫານງານ

ອ່ານຕໍ່ໜ້າ 2

ຂ່າວໜ້າໃນ



ບັນດາແຂດເລືອກຕັ້ງ... (ໜ້າ 2)



ບົດສຳພາດຮອງປະທານ... (ໜ້າ 7)




ສິ່ງແວດລ້ອມສົດໃສຊີວິດປອດໄພ (ໜ້າ 12)

## ແລກປ່ຽນບົດຮຽນການດຳເນີນກອງປະຊຸມ ຂອງ ສພຂ



(ສພຊ) ເພື່ອເປັນການແລກປ່ຽນບົດຮຽນ ແລະ ມີຄວາມຮັບຮູ້ເຂົ້າໃຈກ່ຽວກັບການກະກຽມດຳເນີນກອງປະຊຸມຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ II ໃນໄລຍະຜ່ານມາ ເປັນຕົ້ນ ການກະກຽມ, ການດຳເນີນ, ການຄົ້ນຄວ້າ, ການພິຈາລະນາ, ຮັບຮອງເນື້ອໃນກອງປະຊຸມ ເພື່ອເຫັນໄດ້ດ້ານດີທີ່ຈະຕ້ອງສືບຕໍ່ຈັດຕັ້ງປະຕິບັດ ແລະ ຂໍ້ຄົງຄ້າງທີ່ຈະຕ້ອງປັບປຸງແກ້ໄຂ ແລະ ເພື່ອເປັນການແນະນຳການກະກຽມ ແລະ ຮັບໃຊ້ການປະເມີນຄວາມໄວ້ວາງໃຈຂອງບຸກຄະລາກອນທີ່ສະພາແຫ່ງຊາດ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.

ໃນລະຫວ່າງວັນທີ 19-20 ກໍລະກົດ 2023 ທີ່ເມືອງວັງວຽງ ແຂວງວຽງຈັນ ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ຈັດກອງປະຊຸມແລກປ່ຽນບົດຮຽນການດຳເນີນກອງປະຊຸມ ຂອງສະພາປະຊາຊົນຂັ້ນແຂວງ (ສພຂ) ຊຸດທີ II ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ທັງເປັນຜູ້ຊີ້ນຳວຽກງານຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ມີບັນດາທ່ານປະທານ-ຮອງປະທານກຳມາທິການ

ອ່ານຕໍ່ໜ້າ 2

## ຮອງປະທານສະພາແຫ່ງຊາດ ຢ້ຽມຢາມ ແລະ ເຮັດວຽກ ຢູ່ ສ.ຣັດເຊຍ



(ສພຊ) ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ທັງເປັນປະທານຄະນະມິດຕະພາບລັດຖະສະພາລາວ-ຣັດເຊຍ ພ້ອມດ້ວຍຄະນະ ໄດ້ເດີນທາງໄປຢ້ຽມຢາມ ແລະ ເຮັດວຽກຢ່າງເປັນທາງການ ຢູ່ນະຄອນຫຼວງມົດສະກູ ສ.ຣັດເຊຍ ໃນລະຫວ່າງວັນທີ 20-25 ກໍລະກົດ 2023 ໂດຍການຕ້ອນຮັບຂອງທ່ານ ປາເວວ ຕຣາການົບ ປະທານຄະນະມິດຕະພາລັດຖະສະພາ ຣັດເຊຍ-ລາວ, ສະມາຊິກກຳມາທິການງົບປະມານ ແລະ ຕະຫລາດການເງິນ ສະພາສູງ ຣັດເຊຍ.

ໃນການເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຄັ້ງນີ້, ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ນຳພາຄະນະພົບປະສອງຝ່າຍ ກັບທ່ານ ປາແວວ ທາຣາການົບ ພ້ອມດ້ວຍຄະນະ

ອ່ານຕໍ່ໜ້າ 2

## ເຜີຍແຜ່ ແລະ ເຊື່ອມຊຶມການກຳນົດຕຳແໜ່ງງານ



(ສພຊ) ວັນທີ 25 ກໍລະກົດ 2023 ທີ່ສະພາແຫ່ງຊາດ ໄດ້ຈັດກອງປະຊຸມເຜີຍແຜ່ ແລະ ເຊື່ອມຊຶມການກຳນົດຕຳແໜ່ງງານຂອງບັນດາກົມທີ່ຂຶ້ນກັບຄະນະເລຂາທິການສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາຄະນະພັກຮາກຖານ, ເລຂາທິການສະພາແຫ່ງຊາດ ເຂົ້າຮ່ວມມີບັນດາຫົວໜ້າ-ຮອງຫົວໜ້າກົມ, ຄະນະພະແນກ ແລະ ພະນັກງານທີ່ຂຶ້ນກັບຄະນະເລຂາທິການສະພາແຫ່ງຊາດ.

ໃນກອງປະຊຸມ, ທ່ານ ແສງແກ້ວ ວົງນະລາດ ຫົວໜ້າກົມຈັດຕັ້ງ-ພະນັກງານ ໄດ້ຜ່ານບັນດາຂໍ້ຕົກລົງຂອງກະຊວງພາຍໃນ ວ່າດ້ວຍການຮັບຮອງຜົນການກຳນົດຕຳແໜ່ງງານຂອງກົມ ແລະ ຫ້ອງການ ທີ່ຂຶ້ນກັບຄະນະເລຂາທິການສະ

ອ່ານຕໍ່ໜ້າ 2

## ຄະນະຜູ້ແທນສະພາແຫ່ງຊາດ ຢ້ຽມຢາມແລກປ່ຽນບົດຮຽນວຽກງານລັດຖະສະພາ ຢູ່ສະຫະລັດອາເມລິກາ



(ສພຊ) ຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສປປ ລາວ ນຳໂດຍ ທ່ານ ສັນຍາ ປຣະເສີດ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະກຳມາທິການ, ຄະນະເລຂາທິການ, ສະຖາບັນຄົ້ນຄວ້ານິຕິກຳ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ

ອ່ານຕໍ່ໜ້າ 3

## ອຳນວຍການໃຫຍ່ໂທລະພາບ ສະພາແຫ່ງຊາດ ສສ. ຫວຽດນາມ ເຂົ້າຢ້ຽມຂໍ່ານັບເລຂາທິການສະພາແຫ່ງຊາດ

(ສພຊ) ໃນວັນທີ 25 ກໍລະກົດຜ່ານມາ ທີ່ສະພາແຫ່ງຊາດ ແຫ່ງ ສປປ ລາວ ສະຫາຍ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ເລ ກວ່າງ ມິ່ງ ຫົວໜ້າອຳນວຍການໂທລະພາບ ສະພາແຫ່ງຊາດ ແຫ່ງ ສສ. ຫວຽດນາມ ພ້ອມດ້ວຍຄະນະ ເນື່ອງໃນໂອກາດທີ່ເດີນທາງມາຢ້ຽມຢາມພົບປະເຮັດວຽກຮ່ວມກັບກົມສື່ມວນຊົນ ຄະນະເລຂາທິການສະພາແຫ່ງຊາດລາວ ໃນລະຫວ່າງວັນທີ 24-26 ກໍລະກົດ 2023.

ໃນໂອກາດນີ້, ສະຫາຍ ນາງ ປິ່ງຄຳ ລາຊະສິມມາ ໄດ້ກ່າວສະແດງຄວາມພາກພູມໃຈເປັນຢ່າງຍິ່ງທີ່ໄດ້ຕ້ອນຮັບ ສະຫາຍ ເລ ກວ່າງ ມິ່ງ ພ້ອມດ້ວຍຄະນະ ໃນໂອກາດທີ່ມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ, ຕີລາຄາສູງຕໍ່ການຢ້ຽມຢາມໃນຄັ້ງນີ້ ເພາະເປັນການປະກອບສ່ວນສຳຄັນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່,

ອ່ານຕໍ່ໜ້າ 3

## ບັນດາເຂດເລືອກຕັ້ງ ໄດ້ຮັບເຄື່ອງລົງຄະແນນສຽງ



(ສພຊ) ວັນທີ 18 ກໍລະກົດຜ່ານມາ, ທີ່ຫໍສະພາແຫ່ງຊາດ ນະຄອນຫຼວງວຽງຈັນ ໄດ້ມີພິທີມອບ-ຮັບ ເຄື່ອງລົງຄະແນນສຽງ ໃຫ້ 13 ເຂດເລືອກຕັ້ງ ຄື: ຜົ້ງສາລີ, ຫຼວງນໍ້າທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ໄຊຍະບູລີ, ຫົວພັນ, ຊຽງຂວາງ, ວຽງຈັນ, ໄຊສົມບູນ, ຄໍາມ່ວນ, ສະຫວັນນະເຂດ ແລະ ສາລະວັນ ເຊິ່ງກ່າວມອບໂດຍທ່ານ ນາງ ປິ່ງຄໍາ ລາຊະສິມມາ ເລຂາທິການສະພາແຫ່ງຊາດ ແລະ ຕາງໜ້າຮັບໂດຍບັນດາເລຂາທິການ-ຮອງເລຂາສະພາປະຊາຊົນແຂວງ ແລະ ມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພິຍານ.

ໃນໂອກາດດັ່ງກ່າວ, ຕາງໜ້າບັນດາເຂດເລືອກຕັ້ງ ໄດ້ກ່າວສະແດງຄວາມຂອບໃຈ ແລະ ຈະນໍາໃຊ້ອຸປະກອນດັ່ງກ່າວ ເຂົ້າໃນວຽກງານຂອງຕົນ ໃຫ້ເກີດປະໂຫຍດສູງສຸດ.

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ພັກ ຄັ້ງທີ V ຂອງອົງຄະນະພັກ ກະຊວງອຸດສາຫະກໍາ ແລະ ການຄ້າ, ແຜນພັດທະນາອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ 5 ປີ (2021-2025) ໂດຍຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ, ດ້ວຍຄວາມຕັ້ງໜ້າບຸກບືນ ແລະ ຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ ເຊິ່ງສາມາດບັນລຸໄດ້ຜົນສໍາເລັດໃນຫຼາຍດ້ານ ໂດຍສະເພາະດ້ານນິຕິກໍາ ເຊັ່ນ: ກົດໝາຍວ່າດ້ວຍວິສາຫະກິດ, ດ້ານການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ດ້ານການຄຸ້ມຄອງການເໜັງຕີງຂອງລາຄາສິນຄ້າ, ການແກ້ໄຂສະພາບຂາດແຄນນໍ້າມັນ ແລະ ອື່ນໆ.

ໂອກາດນີ້, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກໍາມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ກໍໄດ້ໃຫ້ກຽດມີຄໍາເຫັນສະແດງເຖິງຄວາມເປັນຫ່ວງເປັນໃຍ ແລະ ຄວາມເອົາໃຈໃສ່ຂອງກົມການເມືອງສູນກາງພັກ ຕໍ່ການພັດທະນາຂະແໜງອຸດສາຫະກໍາ ແລະ ການຄ້າຂອງປະເທດເຮົາເພື່ອນໍາໃຊ້ທ່າແຮງອຸດສາຫະກໍາ 4.0 ໃນການຫັນເປັນອຸດສາຫະກໍາ ແລະ ທັນສະໄໝ ຂອງປະເທດ ຕາມທິດສີຂຽວ ແລະ ຍືນຍົງ. ພ້ອມກັນນັ້ນ, ສະຫາຍໄດ້ຊີ້ນໍາຢ່າງເລິກເຊິ່ງເຖິງຖອງໃຫ້ເອົາໃຈໃສ່ວຽກງານສຶກສາອົບຮົມດ້ານການເມືອງ-ແນວຄິດໃຫ້ແກ່ສະມາຊິກພັກ-ພະນັກງານ ໃຫ້ມີຄວາມຮັບຮູ້ຢ່າງກວ້າງຂວາງ, ປັບປຸງ ແລະ ກໍ່ສ້າງພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນຕາມທິດສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ, ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານໃນການນໍາພາຂອງພັກ; ກໍ່ສ້າງພະນັກງານ ໃຫ້ມີລະດັບຄວາມຮູ້ທາງດ້ານທິດສະດີການເມືອງ ມີຄວາມຮູ້ທາງດ້ານວິຊາສະເພາະຢ່າງໜັກແໜ້ນ; ບັນຈຸສັບຊ້ອນພະນັກງານ ໃຫ້ຖືກຕ້ອງເໝາະສົມຕາມມາດຖານຕໍາແໜ່ງງານທີ່ກໍານົດໄວ້; ປັບປຸງນິຕິກໍາເກົ່າທີ່ບໍ່ສອດຄ່ອງ ແລະ ສ້າງນິຕິກໍາໃໝ່ໃຫ້ພຽງພໍ ແລະ ແທດເໝາະກັບການຂະຫຍາຍຕົວຂອງເສດຖະກິດ ແລະ ສັງຄົມ.

ໃນວາລະກອງປະຊຸມ ຍັງໄດ້ດໍາເນີນການປ່ອນບັດທາບທາມຄວາມເຊື່ອໝັ້ນໄວ້ວາງໃຈຕໍ່ການນໍາພາ ແລະ ການປະກອບຄໍາຄິດເຫັນທີ່ຈິງໃຈ, ກົງໄປກົງມາ ແລະ ນໍາໃຊ້ສິດປະຊາທິປະໄຕຢ່າງເຕັມທີ່ ຕໍ່ກັບການນໍາພາລວມ ແລະ ບຸກຄົນ ເພື່ອປັບປຸງແກ້ໄຂການຊີ້ນໍາ-ນໍາພາວຽກງານຂະແໜງອຸດສາຫະກໍາ ແລະ ການຄ້າ ໃຫ້ກ້າວໜ້າ ແລະ ຍາດໄດ້ຜົນງານທີ່ພົ້ນເດັ່ນ ແລະ ບັນລຸຜົນສໍາເລັດຕາມຄາດໝາຍທີ່ວາງໄວ້.

## ເຜີຍແຜ່...

(ຕໍ່ຈາກໜ້າ 1)

ພາແຫ່ງຊາດ ເຊິ່ງປະກອບມີ 6 ກົມ ແລະ 1 ຫ້ອງການ; ຈາກນັ້ນ, ບັນດາກົມທີ່ກ່ຽວຂ້ອງໄດ້ຜັດປ່ຽນກັນຂຶ້ນລາຍງານການສັບຊ້ອນ ແລະ ການຈັດວາງພະນັກງານ-ລັດຖະກອນຂອງກົມ ຕາມການຮັບຮອງຂອງກະຊວງພາຍໃນ.

ໃນຕອນທ້າຍ, ທ່ານປະທານກອງປະຊຸມ ໄດ້ສະຫຼຸບສັງລວມ ແລະ ມີຄໍາເຫັນໂອ້ລົມຕໍ່ທີ່ປະຊຸມ ທັງເນັ້ນໜັກໃຫ້ບັນດາກົມທີ່ຍັງບໍ່ທັນສໍາເລັດໃນການສັບຊ້ອນ ແລະ ການຈັດວາງພະນັກງານ-ລັດຖະ ກອນພາຍໃນກົມຂອງຕົນ ໃຫ້ຮີບຮ້ອນສັງລວມ ແລະ ສະຫຼຸບລາຍງານຕໍ່ຄະນະປະຈໍາສະພາແຫ່ງຊາດໃຫ້ທັນຕາມກໍານົດເວລາ.

**(ກຸກກີກ ບຸດດາໄຊ)**

## ແລກປ່ຽນ...

(ຕໍ່ຈາກໜ້າ 1)

ວຽກງານສະມາຊິກສະພາແຫ່ງຊາດ, ບັນດາທ່ານປະທານ-ຮອງປະທານ, ເລຂາ-ຮອງເລຂາທິການສະພາປະຊາຊົນຂັ້ນແຂວງ ຈາກ 18 ແຂວງທົ່ວປະເທດ ແລະ ບັນດາຄະນະຮັບຜິດຊອບກອງປະຊຸມເຂົ້າຮ່ວມ, ໂດຍໄດ້ຮັບການສະໜັບສະໜູນທຶນຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPS).

ກອງປະຊຸມ ໄດ້ຮັບຟັງການສະເໜີບົດຕີລາຄາຜົນສໍາເລັດການດໍາເນີນກອງປະຊຸມຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ II ໃນໄລຍະຜ່ານມາ; ບົດກ່ຽວກັບການພົວພັນປະສານງານການກະກຽມດ້ານເນື້ອໃນ ເພື່ອນໍາເຂົ້າພິຈາລະນາໃນກອງປະຊຸມສະພາປະຊາຊົນນະຄອນຫຼວງ ແລະ ການຮ່າງມະຕິກອງປະຊຸມ; ບົດກ່ຽວກັບການບັນຊາກອງປະຊຸມຂອງປະທານ ແລະ ການປະກອບຄໍາເຫັນ, ຄໍາຊັກຖາມຂອງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ການສະເໜີບົດແນະນໍາ ກ່ຽວກັບການກະກຽມ ແລະ ດໍາເນີນການປະເມີນຄວາມໄວ້ວາງໃຈໃນການປະຕິບັດໜ້າທີ່ຂອງບຸກຄະລາກອນ ທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ແລະ ການແນະນໍາການກະກຽມ ແລະ ດໍາເນີນກອງປະຊຸມຂອງສະພາປະຊາຊົນຂັ້ນແຂວງ ແລະ ການປະເມີນ 4 ກົດໝາຍ (ໃນຂົງເຂດສະພາແຫ່ງຊາດ) ຈາກນັ້ນ, ຜູ້ແທນກອງປະຊຸມໄດ້ຜັດປ່ຽນກັນປະກອບຄໍາຄິດຄໍາເຫັນ ເພື່ອແລກປ່ຽນບົດຮຽນ ເຊິ່ງກັນແລະກັນ ໃສ່ຫົວຂໍ້ທີ່ນໍາມາສະເໜີ ແລະ ຕາມຄໍາຖາມເຈາະຈີ້ມຂອງປະທານກອງປະຊຸມ ແລະ ໄດ້ຮັບຟັງການໂອ້ລົມຊີ້ທິດເຍືອງທາງໃນການປະຕິບັດໜ້າທີ່ຂອງສະພາປະຊາຊົນຂັ້ນແຂວງຈາກປະທານກອງຊຸມ.

**(ສອນສັກ ວັນວິໄຊ)**

## ຮອງປະທານ...

(ຕໍ່ຈາກໜ້າ 1)

ມິດຕະພາບລັດຖະສະພາ ຣັດເຊຍ-ລາວ, ທັງສອງຝ່າຍໄດ້ຕີລາຄາສູງຕໍ່ການພົບປະ ແລະ ຢ້ຽມຢາມໃນຄັ້ງນີ້ ຖືເປັນການສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອທີ່ມີມາແຕ່ດົນນານ ແລະ ຕໍ່ເນື່ອງ ລະຫວ່າງ ສປປ ລາວ ແລະ ສ.ຣັດເຊຍ ເວົ້າລວມ, ເວົ້າສະເພາະລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາຣັດເຊຍ ໃຫ້ແໜ້ນແຟ້ນ ແລະ ນັບມື້ນັບຂະຫຍາຍຕົວຍິ່ງໆຂຶ້ນ ເຊິ່ງຖືເປັນກົນໄກໜຶ່ງເພື່ອຊຸກຍູ້ ແລະ ສົ່ງເສີມການພົວພັນ ແລະ ຮ່ວມມືຂອງສອງອົງການນິຕິບັນຍັດໃຫ້ນັບມື້ນັບເຂົ້າສູ່ລວງເລິກ ແລະ ເປັນຮູບປະທໍາຍິ່ງໆຂຶ້ນ ໂດຍສະເພາະແມ່ນການຊຸກຍູ້ຂະແໜງການເສດຖະກິດຂອງສອງຝ່າຍ ໃຫ້ເພີ່ມທະວີການຮ່ວມມືໃນແຕ່ລະຂົງເຂດທີ່ທັງສອງຝ່າຍມີທ່າແຮງ ແລະ ມີຄວາມສົນໃຈນໍາກັນ.

ໃນການພົບປະແລກປ່ຽນບົດຮຽນນໍາກັນ ທັງສອງຝ່າຍໄດ້ແຈ້ງສະພາບການໂດຍສັງເຂບກ່ຽວກັບການພັດທະນາເສດຖະກິດ-ສັງຄົມ ແລະ ການເຄື່ອນໄຫວຂອງອົງການນິຕິບັນຍັດ ໃຫ້ກັນ ແລະ ກັນຊາບ; ພ້ອມນີ້, ສອງຝ່າຍໄດ້ຕີລາສູງການພົວພັນ ແລະ ຮ່ວມມືສອງຝ່າຍ ຂອງອົງການນິຕິບັນຍັດ ແລະ ຂອງສອງຄະນະມິດຕະພາບລັດຖະສະພາລາວ-ຣັດເຊຍ, ຣັດເຊຍ-ລາວ ໃນໄລຍຜ່ານມາ ເຊິ່ງສະແດງອອກໃນການຈັດຕັ້ງປະຕິບັດບັນດາແຜນການຮ່ວມມື, ກົນໄກການຮ່ວມມືຕ່າງໆລະຫວ່າງສອງຄະນະມິດຕະພາບ ແລະ ສອງສະພາລາວ-ຣັດເຊຍ ຢ່າງຕັ້ງໜ້າ ແລະ ນັບມື້ນັບເປັນຮູບປະທໍາ ເປັນຕົ້ນການແລກປ່ຽນການຢ້ຽມຢາມ, ແລກປ່ຽນຂໍ້ມູນຂ່າວສານ ແລະ ທັດສະນະຕໍ່ບັນຫາຕ່າງໆ ຂອງພາກພື້ນ ແລະ ສາກົນ; ພ້ອມກັນນີ້, ຍັງໄດ້ເອກະພາບກ່ຽວກັບທິດທາງການຮ່ວມມືໃນຕໍ່ໜ້າອີກດ້ວຍ.

ໂອກາດດັ່ງກ່າວ, ທ່ານ ພົທ. ສຸວອນ ເລືອງບຸນມີ ພ້ອມດ້ວຍຄະນະ ຍັງໄດ້ພົບປະກັບທ່ານ ກັນສະຕານຈິນ ໂກຊາຈົບ ຮອງປະທານສະພາສູງ, ທ່ານ ໂຊບານ ວາເລລີເອວິຈ ຮອງປະທານດູມາ ແຫ່ງ ສ.ຣັດເຊຍ, ພົບປະຢ້ຽມຢາມສະມາຄົມມິດຕະພາບ ຣັດເຊຍ-ລາວ ເຊິ່ງໄດ້ພ້ອມກັນຍົກໃຫ້ເຫັນຄວາມໝາຍສໍາຄັນຂອງສາຍພົວພັນມິດຕະພາບອັນເປັນມູນເຊື້ອລະຫວ່າງ ສປປ ລາວ ແລະ ສ.ຣັດເຊຍ ກໍຄືຄວາມສະໜິດສະໜົມຂອງປະຊາຊົນສອງເທດ ທີ່ມີມູນເຊື້ອຊ່ວຍເຫຼືອສະໜັບສະໜູນ ເຊິ່ງກັນແລະກັນ ເປັນຕົ້ນ ດ້ານການສຶກສາ, ສ້າງຊັບພະຍາກອນມະນຸດໃນທຸກຂົງເຂດ; ນອກນີ້, ສອງຝ່າຍຍັງໄດ້ສັງເກດຕີລາຄາວ່າການພົວພັນທາງດ້ານເສດຖະກິດ, ການຄ້າ ແລະ ການທ່ອງທ່ຽວຍັງບໍ່ຫລາຍ ເຊິ່ງສອງຝ່າຍຄວນສົ່ງເສີມຕໍ່ໜ້າ. ໃນໂອກາດນີ້, ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ພົບປະໂອ້ລົມກັບພະນັກງານສະຖານທູດ ແລະ ນັກສຶກສາລາວ ທີ່ກໍາລັງສຶກສາຢູ່ ສ.ຣັດເຊຍ ເພື່ອຢ້ຽມຢາມຖາມຂ່າວ ແລະ ໃຫ້ກໍາລັງໃຈນັກສຶກສາທີ່ຢູ່ຕ່າງແດນ ໃຫ້ຕັ້ງໃຈສຶກສາຄົ້ນຄວ້າຮໍ່າຮຽນເພື່ອນໍາເອົາຄວາມຮູ້ ແລະ ບົດຮຽນອັນດີໄປພັດທະນາປະເທດຊາດ.

ນອກຈາກນີ້, ຄະນະຍັງໄດ້ຢ້ຽມຢາມພິພິທະພັນຖານປະຫວັດສາດ, ເສດຖະກິດ-ວັດທະນະທໍາ ຈໍານວນໜຶ່ງ ຂອງ ຣັດເຊຍ ຕື່ມອີກ.




***# ຄັດໂດຍ: ຫອມສະນິດ***

*❒ ອີງຕາມການເຜີຍຂໍ້ມູນຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ກະຊວງອຸດສາຫະກໍາ ແລະ ການຄ້າ ໄດ້ໃຫ້ຮູ້ວ່າ: ມູນຄ່າການນໍາເຂົ້າ ແລະ ສົ່ງອອກສິນຄ້າ ຂອງ ສປປ ລາວ ປະຈໍາເດືອນມິຖຸນາ 2023 ບັນລຸໄດ້ປະມານ 1.041 ລ້ານໂດລາສະຫະລັດ. ໃນນີ້, ມູນຄ່າການສົ່ງອອກປະມານ 458 ລ້ານໂດລາ, ມູນຄ່າການນໍາເຂົ້າ ປະມານ 584 ລ້ານໂດລາ ເຮັດໃຫ້ ສປປ ລາວ ຂາດດຸນການຄ້າ ປະມານ 126 ລ້ານໂດລາ (ໃນນີ້ ຍັງບໍ່ລວມເອົາການສົ່ງອອກໄຟຟ້າ).*

***ໜສພ. ປະຊາຊົນ 21/07/2023***

*❒ ໃນໄລຍະ 6 ເດືອນທ້າຍປີ 2023, ລັດຖະບານຈະສຸມໃສ່ແກ້ໄຂບັນຫາທີ່ເຄັ່ງຮ້ອນໃນປັດຈຸບັນ ເປັນຕົ້ນ ບັນຫາທາງດ້ານເສດຖະກິດ, ການເງິນ-ເງິນຕາ, ການເໜັງຕີງຂອງລາຄາສິນຄ້າ ແລະ ໜີ້ສິນຕ່າງໆ ເພື່ອເຮັດໃຫ້ເສດຖະກິດ ຂອງ ສປປ ລາວ ຂະຫຍາຍຕົວຕໍ່ເນື່ອງ ແລະ ມີຄວາມໝັ້ນທ່ຽງ ໂດຍມອບໃຫ້ບັນດາກະຊວງ-ອົງການ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນສຸມໃສ່ຈັດຕັ້ງປະຕິບັດໃຫ້ແຂງແຮງບົນຈິດໃຈບຸກທະລຸ, ຖືເອົາການແກ້ໄຂບັນຫານີ້ເປັນບຸລິມະສິດອັນດັບໜຶ່ງ.*

***ໜສພ. ປະເທດລາວ 21/07/2023***

## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

ຈຳນວນໜຶ່ງ ໄດ້ເດີນທາງໄປຢ້ຽມຢາມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນກ່ຽວກັບວຽກງານລັດຖະສະພາ ກັບລັດຖະສະພາ ຂອງສະຫະລັດອາເມຣິກາ ຢູ່ທີ່ນະຄອນຫຼວງວໍຊິງຕັນ ດີຊີ, ສະຫະລັດອາເມຣິກາ, ໃນລະຫວ່າງວັນທີ 16-22 ກໍລະກົດ 2023 ຕາມການສະໜັບສະໜູນຂອງມູນນິທິອາຊີ.

ໃນການເຄື່ອນໄຫວເຮັດວຽກໃນຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ພົບປະເຮັດວຽກກັບທ່ານ ໂດໂນ ສ.ເບເຢີ ສະມາຊິກສະພາຜູ້ແທນປະຊາຊົນ ຂອງສະຫະລັດອາເມຣິກາ ເຊິ່ງສອງຝ່າຍ ໄດ້ປຶກສາຫາລືກ່ຽວກັບການຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມື ລະຫວ່າງສອງປະເທດລາວ-ອາເມຣິກາ ກໍຄືລະຫວ່າງສອງອົງການນິຕິບັນຍັດພ້ອມທັງໄດ້ແລກປ່ຽນຄຳເຫັນ ກ່ຽວກັບທິດທາງການພົວພັນຮ່ວມມືໃນຕໍ່ໜ້າ. ທ່ານຫົວໜ້າຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ສະເໜີໃຫ້ລັດຖະສະພາອາເມຣິກາ ໂດຍຜ່ານທ່ານສະມາຊິກສະພາຜູ້ແທນປະຊາຊົນຊ່ວຍສະໜັບສະໜູນ, ເພີ່ມທະວີການຮ່ວມມື ແລະ ໃຫ້ການຊ່ວຍເຫຼືອແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໃນການສ້າງຄວາມເຂັ້ມແຂງດ້ານວິຊາການ ແລະ ການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລະຫວ່າງຊາດອາຊຽນ ຫຼື ໄອປາ ຄັ້ງທີ 45 ໃນປີ 2024 ຢູ່ນະຄອນຫລວງວຽງຈັນ, ສປປ ລາວ. ພ້ອມດຽວກັນນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ພົບປະເຮັດວຽກ ກັບທ່ານ ນາງ ລີຊາ ປີເຕີຊັນ ຮອງຜູ້ຊ່ວຍລັດຖະມົນຕີກະຊວງການຕ່າງປະເທດ ພ້ອມບັນດາທີ່ປຶກສາພິເສດ ຈາກກົມປະຊາທິປະໄຕ, ສິດທິມະນຸດ ແລະ ແຮງງານ ຂອງກະຊວງການຕ່າງປະເທດສະຫະລັດອາເມຣິກາ. ໃນການພົບປະຄັ້ງນີ້, ສອງຝ່າຍ ໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນ ກ່ຽວກັບການປະຕິບັດພະລະບົດບາດ, ການເຄື່ອນໄຫວວຽກງານ, ການຄົ້ນຄ້ວາສ້າງກົດໝາຍ ແລະ ນະໂຍບາຍທີ່ກ່ຽວກັບສິດທິຂອງຄົນພິການ, ການຄົ້ນຄ້ວາຍົກລະດັບ ດຳລັດຂອງນາຍົກລັດຖະມົນຕີ ຂອງ ສປປ ລາວ ມາເປັນກົດໝາຍວ່າດ້ວຍສາດສະໜາ, ການຮ່ວມມືດ້ານການຊອກຫາສິ່ງເສດເຫລືອ ຂອງທະຫານອາເມຣິກາທີ່ຫາຍສາບສູນໃນປາງສົງຄາມຢູ່ ສປປ ລາວ, ການຮ່ວມມືດ້ານການປາບປາມຢາເສບຕິດ, ການຮ່ວມມືກ່ຽວກັບການເກັບກູ້ລະເບີດຝັງດິນບໍ່ທັນແຕກ, ການຊ່ວຍເຫຼືອດ້ານການສົ່ງເສີມສິດທິຂອງຄົນພິການ ຂອງ ສປປ ລາວ ແລະ ບັນຫາອື່ນໆ.

ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ພົບປະ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານລັດຖະສະພາກັບບັນດາຊ່ຽວຊານອາວຸໂສ, ນັກກົດໝາຍ ແລະ ທີ່ປຶກສາດ້ານວິຊາການ ຂອງສະພາສູງ, ສະພາຜູ້ແທນແຫ່ງລັດ, ສະຖາບັນຄົ້ນຄວ້າວຽກງານລັດຖະບານຂອງມະຫາວິທະຍາໄລຊອດເຊີທາວ, ບັນດາຊ່ຽວຊານ ຈາກຫ້ອງສະມຸດກົດໝາຍ ແລະ ສະຖາບັນຄົ້ນຄ້ວານິຕິບັນຍັດຂອງລັດຖະສະພາອາເມຣິກາ. ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ຮຽນຮູ້ ແລະ ເຂົ້າໃຈກ່ຽວກັບກົງຈັກການຈັດຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງທັງສອງສະພາຂອງສະຫະລັດອາເມຣິກາ (ສະພາຕໍ່າ ແລະ ສະພາສູງ). ໃນນີ້, ສະພາສູງ ມີອາຍຸການ 6 ປີ, ສະມາຊິກມີຈຳນວນ 100 ທ່ານ, ປະກອບມີ 16 ກຳມາທິການ ແລະ ອະນຸຄະນະກຳມາທິການຈຳນວນໜຶ່ງ. ສະພາຜູ້ແທນປະຊາຊົນ ມີການເລືອກຕັ້ງທຸກ 2 ປີ, ມີສະມາຊິກ 432 ທ່ານ, ປະກອບມີ 20 ກຳມາທິການ ແລະ ມີອານຸກຳມະທິການຈຳໜຶ່ງ; ລັດຖະສະພາອາເມຣິກາ ໄດ້ສ້າງຕັ້ງສະຖາບັນຄົ້ນຄວ້າລັດຖະສະພາອາເມຣິກາ ເຊິ່ງເປັນກົງຈັກໜຶ່ງໃນການຊ່ວຍສະມາຊິກລັດຖະສະພາຄົ້ນຄວ້າບັນດາກົດໝາຍຕ່າງໆທີ່ ຈະຜ່ານລັດຖະສະພາ. ພາຍຫຼັງຜ່ານການຮັບຮອງກົດໝາຍ, ນິຕິກຳລຸ່ມກົດໝາຍ ແລະ ການອອກນະໂຍບາຍຕ່າງໆ ບັນດາເອກະສານທາງການຈະອອກຜ່ານລະບົບດີຈິຕອນ, ການຄົ້ນຄວ້າວິທະຍາສາດຂອງສະຖາບັນຄົ້ນຄວ້າລັດຖະສະ ພາເປັນມືອາຊີບ ແລະ ຜົນຂອງການຄົ້ນຄວ້າດ້ານວິທະຍາສາດ ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການ ໃນທຸກເວລາ ແລະ ປະຊາຊົນທົ່ວໄປ ສາມາດເຂົ້າເຖິງຂໍ້ມູນໄດ້. ຫ້ອງສະໝຸດກົດໝາຍ ແລະ ສະຖາບັນຄົ້ນຄ້ວາຂອງລັດຖະສະພາອາເມຣິກາ ມີພະນັກງານປະມານ 600 ກ່ວາຄົນ ທີ່ມາຈາກຫຼາຍຂະແໜງວິຊາອາຊີບ ເພື່ອປະຕິບັດໜ້າທີ່ໃນການສະໜອງຂໍ້ມູນ-ຂ່າວສານ ໃຫ້ແກ່ລັດຖະສະພາ ແລະ ສະມາຊິກສະພາລັດຖະສະພາອາເມຣິກາ ຢ່າງມີປະສິດທິຜົນ.

ໃນວັນທີ 19 ກໍລະກົດ 2023, ຄະນະຜູ້ແທນໄດ້ໄປທັດສະນະສຶກສາ ແລະ ເຮັດວຽກຢູ່ລັດມາຣີແລນ ທີ່ຕັ້ງຢູ່ຫ່າງຈາກນະຄອນຫຼວງວໍຊິງຕັນດີຊີ ປະມານ 100 ກ່ວາກິໂລແມັດ, ໃນລັດນີ້ມີປະຊາກອນປະມານ 6 ລ້ານຄົນ, ລັດຖະສະພາຂອງລັດມາຣີແລນ ປະກອບມີສະພາສູງ ແລະ ສະພາຕໍ່າ ເຊິ່ງສະມາຊິກມີຈຳນວນ 188 ທ່ານ; ໃນນັ້ນ, ສະມາຊິກສະພາຕໍ່າມີ 141 ທ່ານ ແລະ ສະພາສູງມີ 47 ທ່ານ, ປະກອບມີ 6 ກຳມາທິການໃນສະພາຕໍ່າ, ມີ 4 ກຳມາທິການ ໃນສະພາສູງ ແລະ ສຳນັກງານຄະນະເລຂາທິການ. ໃນການພົບປະຄັ້ງນີ້, ສອງຝ່າຍ ໄດ້ແລກປ່ຽນຄວາມຄິດເຫັນ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ ຂອງລັດຖະສະພາທ້ອງຖິ່ນ, ຂະບວນການສ້າງກົດໝາຍ, ນິຕິກຳ, ນະໂຍບາຍຕ່າງໆ, ການຈັດສັນງົບປະມານຂອງທ່ອງຖິ່ນ, ພາລະບົດບາດ ໃນການເຂົ້າຮ່ວມໃນການປົກປັກຮັກສາສິ່ງແວດລ້ອມ, ການພົບປະກັບຜູ້ມີສິດເລືອກຕັ້ງ, ການສົ່ງເສີມ ແລະ ສ້າງເງື່ອນໄຂສະພາບແວດລ້ອມໃນການຮັບຟັງເອົາຄຳຄິດເຫັນຂອງປະຊົນ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

ນອກຈາກນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ໄປທັດສະນະສຶກສາ ແລະ ຢ້ຽມຢາມຕຶກອາຄານລັດຖະສະພາ (Capitol Hill), ຕຶກສະພາສູງ, ຕຶກລັດຖະສະພາລັດມາຣີແລນ, ໂຮງຮຽນທະຫານເຮືອ, ບັນດາຫໍພິພິຕະພັນຈຳນວນໜຶ່ງ ເຊິ່ງເປັນສະຖານທີ່ທ່ອງທ່ຽວອັນລືຊື່ ແລະ ຍອດນິຍົມ ຢູ່ນະຄອນຫຼວງວໍຊິງຕັນດີຊີ ແລະ ລັດມາຣີແລນ.

ໃນໂອກາດມາຢ້ຽມຢາມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນ ໃນຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ພົບປະໂອ້ລົມກັບຄະນະນຳຂອງສະຖານເອກອັກຄະລັດຖະທູດ ແລະ ບັນດາພີ່ນ້ອງຄົນເຊື້ອຊາດລາວ ທີ່ດຳລົງຊີວິດ ແລະ ທຳມາຫາກິນ ຢູ່ສະຫະລັດອາເມຣິກາ ແລະ ການາດາ. ຄະນະຜູ້ແທນ ໄດ້ຮັບການຕ້ອນຮັບຢ່າງອົບອຸ່ນ, ເປັນກັນເອງ ແລະ ອຳນວຍຄວາມສະດວກເປັນຢ່າງດີ ຈາກສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ, ມູນນິທິ ອາຊີ ປະຈຳສະຫະລັດອາເມລິກາ ແລະ ສະຖານເອກອັກຄະລັດຖະທູດສະຫະລັດອາເມຣິກາ ປະຈຳ ສປປ ລາວ ອີກດ້ວຍ.

## ອຳນວຍ...

(ຕໍ່ຈາກໜ້າ 1)



ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ເວົ້າລວມ, ເວົ້າສະເພາະລະຫວ່າງ ສອງສະພາແຫ່ງຊາດ ກໍຄື ຄະນະເລຂາທິການສະພາແຫ່ງຊາດ ແລະ ຫ້ອງວ່າການສະພາແຫ່ງຊາດ ພິເສດກໍແມ່ນວຽກງານສື່ມວນຊົນໃຫ້ມີການຂະຫຍາຍຍິ່ງໆຂຶ້ນ; ສະແດງຄວາມຊົມເຊີຍ ຕໍ່ຜົນການພົບປະເຮັດວຽກ ລະຫວ່າງ ສະຫາຍເລ ກວ່າງ ມິ່ງ ແລະ ຄະນະ ກັບສະຫາຍ ສິງຄຳ ວົງພະຈັນ ພ້ອມຄະນະກົມຂອງກົມສື່ມວນຊົນ ຄະນະເລຂາທິການສະພາແຫ່ງຊາດ; ພ້ອມນັ້ນ, ຍັງແຈ້ງໃຫ້ຮູ້ກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະເໜີໃຫ້ພິຈາລະນາຄວາມເປັນໄປໄດ້ໃນການຮ່ວມມືກັນໃນຕໍ່ໜ້າດັ່ງນີ້: ສືບຕໍ່ແລກປ່ຽນຄະນະຜູ້ແທນໃນລະດັບຂັ້ນຕ່າງໆ ໄປ-ມາ ຫາສູ່ກັນຢ່າງເປັນປົກກະຕິ; ສະເໜີຝ່າຍຫວຽດນາມໃຫ້ການຊ່ວຍເຫຼືອໃນການສ້າງຫ້ອງສະຕູດິໂອ ແລະ ອຸປະກອນຕ່າງໆໃນການຮັບໃຊ້ວຽກງານສື່ ແລະ ສືບຕໍ່ແລກປ່ຽນ ແລະ ຖອດຖອນບົດຮຽນວຽກງານສື່ອອນລາຍນຳກັນ ຢູ່ ສສ. ຫວຽດນາມ.

ຈາກນັ້ນ, ສະຫາຍ ເລ ກວ່າງ ມິ່ງ ໄດ້ກ່າວສະແດງຄວາມຂອບໃຈຕໍ່ສະຫາຍ ນາງ ປິ່ງຄຳ ລາຊະສິມມາ ທີ່ໄດ້ເສຍສະຫຼະເວລາອັນມີຄຸນຄ່າໃຫ້ກຽດຕ້ອນຮັບຢ່າງອົບອຸ່ນ ພ້ອມທັງແຈ້ງໃຫ້ຮູ້ກ່ຽວກັບສະຫາຍ ສິງຄຳ ວົງພະຈັນ ພ້ອມຄະນະກົມຂອງກົມສື່ມວນຊົນ ຄະນະເລຂາທິການສະພາແຫ່ງຊາດ, ການພົບປະເຮັດວຽກຮ່ວມກັບຄະນະອຳນວຍການໂທລະພາບແຫ່ງຊາດ ຂອງ ສປປ ລາວ ແລະ ການເຂົ້າພົບປະຢ້ຽມຢາມສະຫາຍ ໂພສີ ແກ້ວມະນີວົງ ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ຮູ້ໂດຍສັງເຂບ ແລະ ເຫັນດີຕໍ່ຂໍ້ສະເໜີຕ່າງໆ ທີ່ສະຫາຍເລຂາທິການສະພາແຫ່ງຊາດ ແຫ່ງ ສປປ ລາວ ໄດ້ສະເໜີມານັ້ນ ແລະ ພ້ອມທີ່ຈະນຳໄປພິຈາລະນາ ແລະ ສືບຕໍ່ປະຕິບັດໃຫ້ເກີດດອກອອກຜົນໃຫ້ຍິ່ງໆຂຶ້ນ; ຈາກນັ້ນ, ຕອນເຊົ້າຂອງວັນທີ 26 ກໍລະກົດ ຄະນະ ຍັງໄດ້ເຮັດວຽກຮ່ວມກັບ ສະຫາຍ ຄຳແທ່ນ ວິລະກຸນ ຫົວໜ້າສູນເຝິກອົບຮົມ ແລະ ຂໍ້ມູນຂ່າວສານ ຂອງສະຖາບັນຄົ້ນຄວ້ານິຕິກຳ ກ່ຽວກັບວຽກງານຂໍ້ມູນຂ່າວສານ ທີ່ສະພາແຫ່ງຊາດລາວ ຕື່ມອີກ

**(ສອນສັກ ວັນວິໄຊ)**




# ທົບທວນຄືນ ການຈັດຕັ້ງປະຕິບັດໂຄງການ ສະໜັບສະໜູນສະພາແຫ່ງຊາດລາວ

(ສພຊ) ເພື່ອເປັນການສົ່ງເສີມວຽກງານການປົກຄອງແບບມີສ່ວນຮ່ວມ, ມີຄວາມຮັບຜິດຊອບ ແລະ ຮັບປະກັນຄວາມສະເໝີພາບບົດບາດຍິງ-ຊາຍ ໃນໄລຍະ 2 ປີຜ່ານມາ ກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ໄດ້ຈັດກອງປະຊຸມທົບທວນຄືນການຈັດຕັ້ງປະຕິບັດໂຄງການສະໜັບສະໜູນສະພາແຫ່ງຊາດລາວ ໃນວັນທີ 21 ກໍລະກົດ 2023 ທີ່ໂຮງແຮມເມືອງແທ່ງ, ໂດຍການເປັນປະທານຂອງທ່ານ ນາງ ດາວເພັດ ສີຫາວົງ ຫົວໜ້າກົມການເງິນ, ຮອງຫົວໜ້າກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ; ມີທ່ານ ນາງ ເພັດມະນີ ໄຊຈະເລີນ ຫົວໜ້າມູນນິທິ WFD, ບັນດາທ່ານຫົວໜ້າ-ຮອງຫົວໜ້າກົມ ພ້ອມດ້ວຍພະນັກງານທີ່ຮັບຜິດຊອບສ້າງແຜນກິດຈະກຳຂອງກົມຕ່າງໆ ພາຍໃນສະພາແຫ່ງຊາດເຂົ້າຮ່ວມ.



ກອງປະຊຸມໄດ້ຮັບຟັງການມີຄຳເຫັນຈາກຕາງໜ້າມູນນິທິ WFD; ສະເໜີທົບທວນຄືນເປົ້າໝາຍໂຄງການ ແລະ ຜົນໄດ້ຮັບ ລວມທັງຄາດໝາຍ, ສິ່ງພົ້ນເດັ່ນທີ່ບັນລຸໄດ້, ວຽກທີ່ຈັດຕັ້ງປະຕິບັດສຳເລັດ ແລະ ສິ່ງທ້າທາຍຕ່າງໆ ທີ່ຜ່ານມາ; ການວາງແຜນໃນໄລຍະຕໍ່ໄປ; ສະເໜີແນະນຳບັນດາກິດຈະກຳ, ເປົ້າໝາຍ ໃນໄລຍະຕໍ່ໜ້າຂອງໂຄງການ ແລະ ຜູ້ເຂົ້າຮ່ວມ ໄດ້ພ້ອມກັນສົນທະນາຖາມ-ຕອບບັນດາບັນຫາທີ່ມີຄວາມສົນໃຈ.

**(ສອນສັກ ວັນວິໄຊ)**

# ສານປະຊາຊົນສູງສຸດ ລາຍງານການປະເມີນກົດໝາຍ

ຕໍ່ຈາກສະບັບກ່ອນ...

ກົດໝາຍວ່າດ້ວຍສານປະຊາຊົນ ມາດຕາທີ່ປະຕິບັດບໍ່ໄດ້ ປະກອບມີ: ມາດຕາ 12, 21 ແລະ ມາດຕາ 32 ກ່ຽວກັບປະເພນີສານ ຍັງບໍ່ສາມາດສ້າງເປັນປະເພນີສານໄດ້ຢ່າງຈະແຈ້ງເທື່ອ; ມາດຕາ 19 ແລະ ມາດຕາ 24 ກຳນົດກ່ຽວກັບສານເດັກ ບໍ່ສາມາດຈັດຕັ້ງສານເດັກຂຶ້ນໄດ້, ຍັງນຳໃຊ້ຄະນະສານເດັກຕັດສິນ, ພິພາກສາຄະດີກ່ຽວກັບເດັກຢູ່ໃນປັດຈຸບັນ; ມາດຕາ 63 ກ່ຽວກັບອັດຕາເງິນເດືອນສະເພາະຂອງຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ ແລະ ຈ່າສານ ບໍ່ທັນໄດ້ແຍກສະເພາະຕາມກົດໝາຍກຳນົດໄວ້.

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ມາດຕາທີ່ປະຕິບັດບໍ່ໄດ້ ປະກອບມີ: ມາດຕາ 30 ກຳນົດເວລາໃນການພິຈາລະນາຕັດສິນຄະດີທີ່ກຳນົດໃຫ້ຄົ້ນຄວ້າ ແລະ ຕັດສິນຄະດີຢູ່ສານຂັ້ນຕົ້ນ 9 ເດືອນ, ຂັ້ນອຸທອນ 4 ເດືອນ, ຂັ້ນລົບລ້າງ 3 ເດືອນໃຫ້ສຳເລັດ. ແຕ່ການປະຕິບັດຕົວຈິງຄະດີສ່ວນຫຼາຍ ບໍ່ສາມາດຄົ້ນຄວ້າ ແລະ ຕັດສິນຄະດີສຳເລັດຕາມກຳນົດເວລາທີ່ກົດໝາຍກຳນົດໄວ້; ມາດຕາ 103 ການຍື່ນຫຼັກຖານໃຫ້ຍື່ນນັບແຕ່ວັນຮັບຄຳຮ້ອງຟ້ອງຈົນຮອດວັນປິດປະຊຸມສານຂັ້ນຕົ້ນ. ໃນພາກປະຕິບັດຕົວຈິງ ບໍ່ໄດ້ຍື່ນທັງໝົດຢູ່ສານຂັ້ນຕົ້ນ, ເມື່ອຕັດສິນໄປແລ້ວ ຄູ່ຄວາມຈະໄປຍື່ນຫຼັກຖານໃໝ່ເພີ່ມຕື່ມຢູ່ສານຂັ້ນອຸທອນ ຫຼື ຂັ້ນລົບລ້າງ ຫຼື ສິ້ນສຸດການດຳເນີນຄະດີຂອງສານກໍມີການຍື່ນຫຼັກຖານຕໍ່ພາກສ່ວນຕ່າງໆ ເຮັດໃຫ້ການດຳເນີນຄະດີຂອງສານຂັ້ນຕົ້ນ ບໍ່ຮັບປະກັນການພິຈາລະນາຫຼັກຖານຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ, ຄະດີສິ່ງກັບໄປ-ມາ ເຮັດໃຫ້ຊັກຊ້າ ແກ່ຍາວໃນການດຳເນີນຄະດີ; ມາດຕາ 124, 125 ແລະ 126 ມາດຕະການຂອງສານ ກ່ຽວກັບການຈຳກັດບໍລິເວນຄູ່ຄວາມໃນຄະດີແພ່ງ, ມາດຕະການບໍ່ໃຫ້ຄູ່ຄວາມເຄື່ອນໄຫວ ຫຼື ກະທຳອັນໃດໜຶ່ງ ແລະ ມາດຕະການບໍ່ໃຫ້ຄູ່ຄວາມປະຕິບັດຂໍ້ຜູກພັນອັນໃດໜຶ່ງ. ມາດຕະການດັ່ງກ່າວໃນພາກປະຕິບັດຕົວຈິງ ບໍ່ໄດ້ປະຕິບັດ ຫຼື ນຳໃຊ້ ເນື່ອງຈາກວ່າຄູ່ຄວາມບໍ່ໄດ້ຮ້ອງຂໍຕໍ່ສານໃຫ້ນຳໃຊ້ມາດຕະການດັ່ງກ່າວ ເຊິ່ງກົດໝາຍໄດ້ກຳນົດໄວ້ຕ້ອງ



ໃຫ້ຄູ່ຄວາມຮ້ອງຂໍ, ສານຈຶ່ງສາມາດນຳໃຊ້ມາດຕະການດັ່ງກ່າວໄດ້ ເວັ້ນເສຍແຕ່ເປັນຜົນປະໂຫຍດຂອງລັດ, ສັງຄົມ ຫຼື ຂອງເດັກ; ມາດຕາ 190 ການໃຫ້ຄູ່ຄວາມມາມີສ່ວນຮ່ວມໃນການດຳເນີນຄະດີແຕ່ເບື້ອງຕົ້ນ, ໃນພາກປະຕິບັດຕົວຈິງ ປະຕິບັດບໍ່ໄດ້ ແລະ ຜູ້ພິພາກສາ ກໍບໍ່ທັນປະຕິບັດຕາມກົດໝາຍກຳນົດຢ່າງເຄັ່ງຄັດ ເນື່ອງຈາກວ່າຄູ່ຄວາມບໍ່ໃຫ້ຄວາມຮ່ວມມື, ມີການອອກໝາຍຮຽກຫຼາຍຄັ້ງແຕ່ບໍ່ເຂົ້າມາສານ. ສະນັ້ນ, ໃນການດຳເນີນຄະດີຕົວຈິງ ຈະສືບຕໍ່ດຳເນີນຄະດີ ໂດຍບໍ່ປະຕິບັດຕາມຂັ້ນຕອນດັ່ງກ່າວທີ່ກົດໝາຍກຳນົດ; ມາດຕາ 278 ການພິພາກສາຂອງສານຂັ້ນອຸທອນເປັນຂັ້ນສຸດທ້າຍທາງດ້ານຂໍ້ມູນຫຼັກຖານ. ໃນພາກປະຕິບັດຕົວຈິງ ພາຍຫຼັງທີ່ສານອຸທອນພິພາກສາແລ້ວ ຄູ່ຄວາມຍັງສະເໜີຂໍ້ມູນຫຼັກຖານໃຫ້ສານຂັ້ນລົບລ້າງພິຈາລະນາ ແລະ ສານຂັ້ນລົບລ້າງຍັງພິຈາລະນາພິພາກສາກ່ຽວກັບຂໍ້ມູນຫຼັກຖານຕາມການສະເໜີ. ເຮັດໃຫ້ຂໍ້ມູນຫຼັກຖານບໍ່ສິ້ນສຸດຕາມກົດໝາຍກຳນົດ; ມາດຕາ 289, 296 ແລະ 298 ກ່ຽວກັບການພິພາກສາຂັ້ນລົບລ້າງທາງດ້ານກົດໝາຍ, ໃນພາກປະຕິບັດຕົວຈິງ, ຄູ່ຄວາມຍັງສະເໜີຫຼັກຖານໃຫ້ສານຂັ້ນລົບລ້າງພິຈາລະນາ ແລະ ສານຂັ້ນລົບລ້າງກໍຍັງພິພາກສາກ່ຽວກັບຫຼັກຖານ, ຍັງບໍ່ພິພາກສາບັນຫາກົດໝາຍ ເພື່ອອະທິບາຍດ້ານກົດໝາຍ ແລະ ສ້າງເປັນປະເພນີສານ, ບໍ່ທັນຮັບປະກັນຫຼັກການພິຈາລະນາຄະດີສາມຂັ້ນຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ ຢ່າງເຂັ້ມງວດ.

ຂໍ້ສະເໜີ:

1. ການຈັດຕັ້ງປະຕິບັດ

- ໃຫ້ພະນັກງານສານ, ອົງການຈັດຕັ້ງ ແລະ ປະຊາຊົນ ເພີ່ມທະວີການປະຕິບັດກົດໝາຍວ່າດ້ວຍສານປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງຢ່າງເຂັ້ມງວດ;

- ສ້າງເງື່ອນໄຂປະກອບວັດຖຸເຕັກນິກທີ່ທັນສະໄໝ ແລະ ເໝາະສົມ ໃນການປະຕິບັດພາລະບົດບາດ, ໜ້າທີ່ວຽກງານຂອງສານໃນການດຳເນີນ ແລະ ຕັດສິນຄະດີ;

- ສ້າງເງື່ອນໄຂ ໃຫ້ມີພາຫະນະ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງຄະນະສານເຄື່ອນທີ່ລົງໄປຕັດສິນຢູ່ຖ້ຽນຄຸມຂັງ ເພື່ອຮັບປະກັນຄວາມປອດໄພໃນການເຄື່ອນຍ້າຍຈຳເລີຍ ມາເຂົ້າຮ່ວມປະຊຸມສານ ຫຼື ເຂດຫ່າງໄກ ເພື່ອບໍລິການຮັບໃຊ້ປະຊາຊົນ;

- ສະໜອງງົບປະມານທີ່ຈຳເປັນ ແລະ ພຽງພໍ ເພື່ອຮັບໃຊ້ໃນການດຳເນີນຄະດີ, ປະກອບຂໍ້ມູນຫຼັກຖານ ແລະ ການຕັດສິນຄະດີ ໂດຍສະເພາະການຕັດສິນຄະດີອາຍາທີ່ກົດໝາຍກຳນົດໃຫ້ນຳໃຊ້ງົບປະມານຂອງລັດ.

2. ການປັບປຸງກົດໝາຍ

2.1 ກົດໝາຍວ່າດ້ວຍສານປະຊາຊົນ: ມາດຕາ 27 ສິດ ແລະ ໜ້າທີ່ ຂອງສານປະຊາຊົນເຂດ; ມາດຕາ 44 ສິດ ແລະ ໜ້າທີ່ຂອງຈ່າສານ; ມາດຕາ 48 ມາດຕະຖານ ແລະ ເງື່ອນໄຂຂອງຜູ້ພິພາກສາ.

2.2 ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ: ພາກທີ III ຈະສຸມໃສ່ປັບປຸງການກຳນົດເວລາສຳລັບການພິຈາລະນາຕັດສິນຄະດີ; ພາກທີ VII ໂດຍສຸມໃສ່ປັບປຸງການອອກຄຳສັ່ງອາຍັດຊັບ, ຍຶດຊັບ; ພາກທີ X ກ່ຽວກັບການດຳເນີນຄະດີຂອງສານຂັ້ນຕົ້ນ ໂດຍສຸມໃສ່ປັບປຸງການຮັບເອົາຄະດີມາພິຈາລະນາ, ການເກັບກຳຂໍ້ມູນຫຼັກຖານ ເປັນຕົ້ນ ການມອບຮັບຫຼັກຖານ ແລະ ວິທີການກວດກາ ຕີລາຄາຫຼັກຖານ; ການໂຕ້ແຍ່ງ ແລະ ອື່ນໆ ທີ່ເຫັນວ່າມີຄວາມຈຳເປັນ; ພາກທີ XI ຈະສຸມໃສ່ປັບປຸງການປະຊຸມສານ, ການຂຽນຄຳຕັດສິນ, ຄຳພິພາກສາ; ພາກທີ XVII ໂດຍສຸມໃສ່ປັບປຸງການຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ.

ນອກຈາກການປັບປຸງກົດໝາຍທີ່ກຳນົດໄວ້ແລ້ວ ຍັງມີຄວາມຈຳເປັນຕ້ອງໄດ້ເພີ່ມບາງມາດຕາເຂົ້າຕື່ມ ເພື່ອຮັບປະກັນໃຫ້ການປະກອບຫຼັກຖານ, ການປິດຮັບຫຼັກຖານ, ການໂຕ້ແຍ່ງ, ການໂຕ້ຖຽງຂອງຄູ່ຄວາມ ແລະ ອື່ນໆ ເພື່ອໃຫ້ການດຳເນີນຄະດີມີຄວາມວ່ອງໄວ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ເຮັດໃຫ້ການຕັດສິນ, ພິພາກສາຄະດີ ຖືກຕ້ອງຕາມກົດໝາຍ ແລະ ຄວາມເປັນຈິງ.

# ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 2 ສະບັບ

ຕໍ່ຈາກສະບັບກ່ອນ...

ປີ 2017 ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໄດ້ຮັບການປັບປຸງເປັນຄັ້ງທີສາມ ເຊິ່ງຖືກຮັບຮອງເອົາໃນກອງປະຊຸມສະພາແຫ່ງຊາດ ສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII, ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 069/ສພຊ, ລົງວັນທີ 14 ພະຈິກ 2017 ແລະ ປະກາດໃຊ້ຕາມລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 321/ປປທ, ລົງວັນທີ 22 ທັນວາ 2017.

ໂດຍລວມແລ້ວ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2017 ຍັງຮັກສາຕາມໂຄງຮ່າງຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 ເຊິ່ງປະກອບມີ XV ພາກ, 34 ໝວດ ແລະ 275 ມາດຕາຄືເກົ່າ ພຽງແຕ່ໄດ້ປັບປຸງບາງເນື້ອໃນ, ໃນບາງມາດຕາໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງ ແລະ ໃຫ້ມີເນື້ອໃນຈະແຈ້ງຂຶ້ນກວ່າເກົ່າ.

ອົງການໄອຍະການປະຊາຊົນ ຖືສຳຄັນວຽກງານໂຄສະນາເຜີຍແຜ່ກົດໝາຍ ເພື່ອໃຫ້ທົ່ວສັງຄົມມີຄວາມຮັບຮູ້, ເຂົ້າໃຈ, ເຄົາລົບ ແລະ ປະຕິບັດກົດໝາຍທັງສອງສະບັບຢ່າງຖືກຕ້ອງ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍໄດ້ຈັດພິມປຶ້ມກົດໝາຍ, ຈັດຊຸດຝຶກອົບຮົມ, ສຳມະນາ, ປາຖະກະຖາ, ອອກໜັງສືພິມ, ອອກລາຍການໂທລະພາບຢ່າງເປັນລະບົບ ເປັນຕົ້ນ ລາຍການກົດໝາຍເພື່ອປະຊາຊົນ ຂອງສະພາແຫ່ງຊາດ, ລາຍການລັດ ແລະ ກົດໝາຍ ຂອງໂທລະພາບແຫ່ງຊາດລາວ; ຈັດພິມກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ຈຳນວນ 5.000 ຫົວ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ 5.000 ຫົວ, ລົງເວັບໄຊຂອງສະພາແຫ່ງຊາດ http//na.gov.la, ເວັບໄຊຂອງລັດຖະບານ http://Laoofficialgazette.gov.la, ເວັບໄຊຂອງອົງການໄອຍະການປະຊາຊົນສູງສຸດ http//ospp.gov.la ຢ່າງກວ້າງຂວາງ ແລະ ທົ່ວເຖິງ, ໄດ້ສ້າງວາລະສານໄອຍະການປະຊາຊົນ ໃນປີ 2016 ຮອດປັດຈຸບັນ ເຊິ່ງໄດ້ຈັດພິມເປັນລາຍໄຕມາດ ເພື່ອເຜີຍແຜ່



ໃຫ້ພະນັກງານໄອຍະການປະຊາຊົນ, ການຈັດຕັ້ງ ແລະ ສັງຄົມຜ່ານມາໄດ້ 29 ສະບັບ, ຈຳນວນ 43.500 ຫົວ, ພ້ອມທັງເກັບກຳຂ່າວລົງໜັງສືພິມ, ວາລະສານ ແລະ ເວັບໄຊ ຂອງອົງການໄອຍະການປະຊາຊົນສູງສຸດ ແລະ ອື່ນໆ.

ເຖິງຢ່າງໃດກໍຕາມ ການໂຄສະນາ, ເຜີຍແຜ່ກົດໝາຍ ແລະ ການຍົກສູງສະຕິເຄົາລົບກົດໝາຍໃຫ້ແກ່ພະນັກງານ, ທະຫານ, ຕຳຫຼວດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ຍັງມີລັກສະນະຈຳກັດ, ບໍ່ທັນກວ້າງຂວາງ ແລະ ທົ່ວເຖິງເທົ່າທີ່ຄວນ, ບໍ່ທັນໄດ້ລົງໂຄສະນາເປັນອັນສະເພາະໂດຍກົງຢູ່ຂັ້ນພື້ນຖານ ພຽງແຕ່ໄດ້ໂຄສະນາສອດທ້ອຍເຂົ້າວຽກງານຕົວຈິງກັບການດຳເນີນຄະດີ ແລະ ການໂຄສະນາລວມ ຮ່ວມກັບພາກສ່ວນອື່ນທີ່ກ່ຽວຂ້ອງເທົ່ານັ້ນ ເຮັດໃຫ້ປະຊາຊົນບັນດາເຜົ່າຈຳນວນໜຶ່ງຍັງບໍ່ທັນເຂົ້າໃຈຕໍ່ລະບຽບກົດໝາຍ, ຂັ້ນຕອນການດຳເນີນຄະດີ ທັງເປັນສາເຫດໜຶ່ງທີ່ພາໃຫ້ປະຊາຊົນທີ່ຢູ່ເຂດຫ່າງໄກສອກຫຼີກບໍ່ສາມາດເຂົ້າເຖິງຂໍ້ມູນຂ່າວສານ, ຂະບວນການຍຸຕິທຳໄດ້ຢ່າງສະດວກເທົ່າທີ່ຄວນ.

ໂດຍອີງຕາມຂໍ້ມູນຈາກການສັງລວມແບບຟອມສອບຖາມຜູ້ເຂົ້າຮ່ວມກອງປະຊຸມປະເມີນຜົນກົດໝາຍ ຢູ່ 3 ພາກ ເຊິ່ງມີຜູ້ເຂົ້າຮ່ວມ 316 ທ່ານ ທີ່ມາຈາກກະຊວງປ້ອງກັນຄວາມສະຫງົບ, ສານປະຊາຊົນ, ອົງການປົກຄອງທ້ອງຖິ່ນ, ສະພາປະຊາຊົນຂັ້ນແຂວງ, ທະນາຍຄວາມ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນໃນຂອບເຂດທົ່ວປະເທດ ເຫັນວ່າ 89,52% ຂອງຜູ້ເຂົ້າຮ່ວມກອງປະຊຸມແມ່ນໄດ້ຮັບການເຜີຍແຜ່ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ 10,48% ແມ່ນບໍ່ໄດ້ຮັບການເຜີຍແຜ່. ຜູ້ເຂົ້າຮ່ວມມີຄວາມຮັບຮູ້ ແລະ ເຂົ້າໃຈດີຕໍ່ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ 79,46%, ພໍເຂົ້າໃຈ 19,95% ແລະ 0,59% ເຫັນວ່າບໍ່ເຂົ້າໃຈ.

ສ່ວນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເຫັນວ່າຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບການເຜີຍແຜ່ 89,31%, ບໍ່ໄດ້ຮັບການເຜີຍແຜ່ 10,69%. ຜູ້ເຂົ້າຮ່ວມມີຄວາມຮັບຮູ້ ແລະ ເຂົ້າໃຈດີກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການດຳເນີນຄະດີອາຍາ 78%, ພໍເຂົ້າໃຈ 21,06% ແລະ 0,94 % ເຫັນວ່າບໍ່ເຂົ້າໃຈ. ຜູ້ເຂົ້າຮ່ວມມີຄວາມຮັບຮູ້ ແລະ ເຂົ້າໃຈດີກ່ຽວກັບຂັ້ນຕອນການດຳເນີນຄະດີອາຍາ 70,67%, ພໍເຂົ້າໃຈ 27,38% ແລະ 1,95% ເຫັນວ່າບໍ່ເຂົ້າໃຈ.

ໂດຍອີງຕາມຂໍ້ມູນທີ່ສັງລວມໄດ້ຈາກແບບຟອມສອບຖາມຜູ້ເຂົ້າຮ່ວມກອງປະຊຸມປະເມີນຜົນກົດໝາຍ ທີ່ກ່າວມານັ້ນ ການສະໜອງຂໍ້ມູນ ແລະ ການບໍລິການແກ່ປະຊາຊົນ ເຫັນວ່າເຮັດໄດ້ດີ 82,72%, ດີພໍໃຊ້ 12,13% ແລະ 5,15% ເຫັນວ່າຍັງມີຄວາມຫຍຸ້ງຍາກ. ການເຂົ້າເຖິງອົງການໄອຍະການປະຊາຊົນ ເຫັນວ່າມີສະດວກດີ 71,63%; ພໍເຂົ້າເຖິງໄດ້ 26,21% ແລະ 2,16% ເຫັນວ່າຍັງມີຄວາມຫຍຸ້ງຍາກ.

ສຳລັບອົງການດຳເນີນຄະດີອາຍາ ມີ 78,65% ຂອງຜູ້ເຂົ້າຮ່ວມ ເຫັນວ່າການສະໜອງຂໍ້ມູນ ແລະ ການບໍລິການແກ່ປະຊາຊົນ ເຮັດໄດ້ດີ, 17,33% ເຫັນວ່າພໍໃຊ້ໄດ້ ແລະ 4,02% ເຫັນວ່າມີຄວາມຫຍຸ້ງຍາກ. ການເຂົ້າເຖິງອົງການດຳເນີນຄະດີອາຍາ 77,16% ເຫັນວ່າສະດວກດີ, 17,52% ເຫັນວ່າ ພໍເຂົ້າເຖິງໄດ້ ແລະ 5,32% ເຫັນວ່າ ມີຄວາມຫຍຸ້ງຍາກ. ນອກຈາກນັ້ນ, ຍັງໄດ້ສອບຖາມກ່ຽວກັບກົນໄກປະສານງານ ລະຫວ່າງ ອົງການໄອຍະການປະຊາຊົນ ແລະ ອົງການດຳເນີນຄະດີອາຍາອື່ນ ມີ 74,01% ເຫັນວ່າມີຄວາມສະດວກດີ; 20,68% ເຫັນວ່າພໍໃຊ້ໄດ້ ແລະ 5,31% ເຫັນວ່າມີຄວາມຫຍຸ້ງຍາກ.

ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງປີ 2017 ໄດ້ກຳນົດໃຫ້ມີບົດບັນຍັດຂະຫຍາຍເປັນນິຕິກຳໃຕ້ກົດໝາຍ ມີ 3 ມາດຕາຄື: ມາດຕາ 21 ໂຄງປະກອບການຈັດຕັ້ງ; ມາດຕາ 25 ມາດຕະຖານຂອງຫົວໜ້າອົງການໄອຍະການ

ອ່ານຕໍ່ສະບັບໜ້າ 8...

# ຫາລືວຽກງານສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ກ່ອນນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5





(ສພຊ) ສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມຮ່ວມກັບພະແນກການທີ່ຮັບຜິດຊອບສ້າງຮ່າງນິຕິກຳໃຕ້ກົດໝາຍ, ຕິດພັນກັບການປະເມີນຄືນຜົນຂອງການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍທີ່ຮັບຮອງແລ້ວ ໃນຕອນເຊົ້າຂອງວັນທີ 5 ກໍລະກົດ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ ໂດຍການເປັນປະທານກອງປະຊຸມຂອງທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ສົມພອນ ແສງສຸລິຈັນ ເລຂາທິການສະພາປະຊາຊົນແຂວງ, ມີຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ຮອງປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ, ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ບັນດາທ່ານຄະນະຮັບຜິດຊອບຊີ້ນຳວຽກງານການສ້າງນິຕິກຳໃຕ້ກົດໝາຍຂັ້ນແຂວງ, ບັນດາທ່ານຕາງໜ້າຈາກພະແນກການຮັບຜິດຊອບສ້າງຮ່າງນິຕິກຳໃຕ້ກົດໝາຍເຂົ້າຮ່ວມ.

ທ່ານ ນາງ ສູນໄຖ ໄຊຍະແສງ ໄດ້ກ່າວໃນທີ່ປະຊຸມວ່າ: ກອງປະຊຸມໃນຄັ້ງນີ້ແມ່ນກອງປະຊຸມທີ່ສຳຄັນເພື່ອກະກຽມໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງສາລະວັນ ຊຸດທີ II ທີ່ເປັນເນື້ອໃນທີ່ສຳຄັນທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງ ສະນັ້ນ, ໂດຍປະຕິບັດຕາມກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015; ກົດໝາຍວ່າດ້ວຍການສ້າງນິຕິກຳໃຕ້ກົດໝາຍ ສະບັບປັບປຸງປີ 2021 ເລກທີ 06/ສພຊ ແລະ ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງປີ 2016 ແລະ ປະຕິບັດຕາມມະຕິກອງປະຊຸມຄັ້ງປະຖົມມະລືກຂອງສະພາປະຊາຊົນແຂວງສາລະວັນ ຊຸດທີ II ທີ່ໄດ້ຮັບຮອງເອົາວຽກງານການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ລວມທັງໝົດ 13 ສະບັບ ໃນນັ້ນ, ປັບປຸງ 2 ສະບັບ ເຊິ່ງເປັນໜຶ່ງໃນພາລະບົດບາດທີ່ກຳນົດໄວ້ໃນກົດໝາຍສະພາປະຊາຊົນຂັ້ນແຂວງ; ເພື່ອຮັບຟັງການລາຍງານຜົນການປະເມີນຄືນຜົນຂອງການຈັດຕັ້ງຜັນຂະຫຍາຍນິຕິກຳໃຕ້ກົດໝາຍ ທີ່ໄດ້ຮັບຮອງໃນໄລຍະຜ່ານມາ ແລະ ລາຍງານຜົນຂອງຄວາມຄືບໜ້າໃນການກະກຽມດ້ານເນື້ອໃນຂອງຮ່າງນິຕິກຳໃຕ້ກົດໝາຍ ພ້ອມທັງຄົ້ນຄ້ວາປຶກສາຫາລືເພື່ອເຮັດໃຫ້ເນື້ອໃນຂອງນິຕິກຳໃຕ້ກົດໝາຍໃຫ້ເນື້ອໃນມີຄຸນນະພາບ, ຮັດກຸມ, ເຂົ້າໃຈງ່າຍ, ຄົບຖ້ວນສົມບູນກວ່າເກົ່າ ສາມາດຮັບຮອງ ແລະ ປະກາດນຳໃຊ້ໄດ້.

ໃນທີ່ປະຊຸມ, ທ່ານ ພັທ. ນາງ ທອງເຫຼືອງ ໂຄດປັນຍາ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ໄດ້ຂຶ້ນຜ່ານຮ່າງບົດລາຍງານກ່ຽວກັບການປະເມີນການຈັດຕັ້ງປະຕິບັດຂໍ້ຕົກລົງທີ່ຈະເປັນເຄື່ອງມືທີ່ເປັນປະໂຫຍດໃຫ້ແກ່ການຕີລາຄາ ແລະ ປະເມີນຢ່າງມີປະສິດທິພາບ, ປະສິດທິຜົນ, ສະດວກໃນການຕິດຕາມຂອງຄະນະຮັບຜິດຊອບຊີ້ນຳການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍຂັ້ນແຂວງ ແລະ ນຳນິຕິກຳໃຕ້ກົດໝາຍດັ່ງກ່າວ ນຳມາປັບປຸງຄືນໃຫ້ມີຄວາມສອດຄ່ອງກັບສະພາບການພັດທະນາໃນແຕ່ລະໄລຍະ; ຈາກນັ້ນ, ບັນດາທ່ານທີ່ຮັບຜິດຊອບສ້າງຮ່າງນິຕິກຳໃຕ້ກົດໝາຍຂອງພະແນກການໄດ້ລາຍງານຜົນຂອງການປະເມີນການຈັດຕັ້ງຜັນຂະຫຍາຍຂອງນິຕິກຳໃຕ້ກົດໝາຍ ມີທັງຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໂດຍສະເພາະຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດຢູ່ແຂວງສາລະວັນ ສະບັບເລກທີ 799/ຈຂ.ສວ, ລົງວັນທີ 20 ກັນຍາ 2018; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຕະຫຼາດວັນນັດຢູ່ແຂວງສາລະວັນ ສະບັບເລກທີ789/ຈຂ.ສວ,ລົງວັນທີ 20 ກັນຍາ 2018; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຂົນສົ່ງໂດຍສານ ແລະ ດ່ານຂົນສົ່ງສິນຄ້າທາງບົກຢູ່ແຂວງສາລະວັນ ສະບັບເລກທີ 615/ຈຂ.ສວ, ລົງວັນທີ 20 ຕຸລາ 2019; ຂໍ້ຕົກລົງວ່າດ້ວຍການກຳນົດເຂດປະເມີນລາຄາທີ່ດິນທົ່ວແຂວງສາລະວັນ ສະບັບເລກທີ 544/ຈຂ.ສວ, ລົງວັນທີ 29 ກັນຍາ 2020; ພ້ອມດຽວກັນ, ພະແນກການທີ່ຮັບຜິດຊອບສ້າງຮ່າງນິຕິກຳໃຕ້ກົດໝາຍໄດ້ລາຍງານຄືນຄວາມພ້ອມຂອງການກະກຽມດ້ານເນື້ອໃນ, ຂະບວນການສ້າງ, ບາດກ້າວຂັ້ນຕອນມາເຖິງປັດຈຸບັນ ເຫັນໄດ້ວ່າມີ 2 ສະບັບ ມີຄວາມພ້ອມ ແລະ ສາມາດນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສ້າງໄໝສາມັນເທື່ອທີ 5 ຄື: ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດຢູ່ແຂວງສາລະວັນ (ສ້າງໃໝ່); ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຄຸນນະພາບນ້ຳດື່ມ ແລະ ນ້ຳກ້ອນ ທີ່ຜະລິດຈາກໂຮງງານພາຍໃນແຂວງສາລະວັນ (ປັບປຸງ); ສຳລັບຮ່າງຂໍ້ຕົກລົງວ່າດ້ວຍສຸຂານາໄມອາຫານຢູ່ຮ້ານອາຫານ, ຮ້ານກິນດື່ມ, ສູນອາຫານ, ຫໍອາຫານ ແລະ ຮ້ານຂາຍອາຫານແຄມທາງ (ສ້າງໃໝ່) ເຫັນດີໃຫ້ສືບຕໍ່ທາບທາມ ແລະ ປັບປຸງເພື່ອໃຫ້ທັນນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສ້າງໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງສາລະວັນ ຊຸດທີ II.

ໂອກາດດຽວກັນ, ຜູ້ແທນກອງປະຊຸມໄດ້ລົງເລິກຄົ້ນຄ້ວາປຶກສາຫາລືເຂົ້າໃສ່ບາງບັນຫາຂໍ້ຫຍຸ້ງຍາກໃນການສ້າງນິຕິກຳໃຕ້ກົດໝາຍດ້ວຍບັນຍາກາດຟົດຟື້ນ ບົນພື້ນຖານຄວາມຮັບຜິດຊອບສູງ ແລະ ຢ່າງກົງໄປກົງມາ ແນໃສ່ເອກະພາບຮ່ວມກັນເຮັດໃຫ້ຂອດການປະສານງານ, ການສ້າງ, ການຕິດຕາມກວດກາ, ການປະເມີນ, ທັນເວລາ, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ.

**(ດີລຳພົນ ພົມມະຈັນ)**

# ຖະແຫຼງຂ່າວການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ

(ສພຊ) ທ່ານ ນະຄະເສນ ສີຫາລາດ ຄະນະປະຈຳສະພາປະຊາຊົນ, ເລຂາທິການສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ໃນຕອນບ່າຍຂອງວັນທີ 26 ກໍລະກົດ 2023 ທີ່ຫ້ອງວ່າການນະຄອນຫຼວງວຽງຈັນ ກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ເຊິ່ງຈະດຳເນີນຂຶ້ນໃນລະຫວ່າງວັນທີ 31 ກໍລະກົດ-4 ສິງຫາ 2023 ຢູ່ທີ່ຫ້ອງປະຊຸມຫ້ອງວ່າການນະຄອນຫຼວງ ເພື່ອຈະສຸມໃສ່ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງນະຄອນຫຼວງວຽງຈັນ ດັ່ງນີ້:



ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງເຈົ້າຄອງນະຄອນຫຼວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານໄລຍະກາງສະໄໝຂອງແຜນການ 5 ປີ ຄັ້ງທີ IX (2021-2025) ຕິດພັນກັບບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງນະຄອນຫຼວງວຽງຈັນ; ຮັບຟັງການລາຍງານການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຄື: ວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນປະຈຳ 6 ເດືອນຕົ້ນປີ 2023 ແລະ ແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023 ຢູ່ນະຄອນຫຼວງ ແລະ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ 6 ເດືອນຕົ້ນປີ 2023 ແລະ ແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023; ຮັບຟັງການລາຍງານການປະເມີນຜົນການຈັດຕັ້ງປະຕິບັດບັນດານິຕິກຳໃຕ້ກົດໝາຍທີ່ສະພາປະຊາຊົນນະຄອນຫຼວງ ໄດ້ຮັບຮອງເອົາຂໍ້ຕົກລົງ ຈຳນວນ 3 ສະບັບ ຄື: ວ່າດ້ວຍການຄວບຄຸ້ມສຽງເນືອງນັນ ໃນນະຄອນຫຼວງວຽງຈັນ, ວ່າດ້ວຍການກຳນົດ ແລະ ຄຸ້ມຄອງທີ່ດິນກະສິກຳ ແລະ ປ່າໄມ້ ຢູ່ນະຄອນຫຼວງວຽງຈັນ ແລະ ວ່າດ້ວຍການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍໃນຕົວເມືອງ ແລະ ຊານເມືອງ; ຮັບຟັງການລາຍງານຂອງອົງການໄອຍະການປະຊາຊົນນະຄອນຫຼວງ ກ່ຽວກັບການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ; ການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນໆຂອງສານ.

ພ້ອມດຽວກັນນີ້, ຮັບຟັງການລາຍງານຂອງສານປະຊາຊົນນະຄອນຫຼວງວຽງຈັນ ກ່ຽວກັບການຍົກສູງຄຸນນະພາບໃນການຕັດສິນຄະດີແພ່ງ ແລະ ຄະດີອາຍາ ເປັນຂັ້ນຕົ້ນ ຢູ່ສານປະຊາຊົນນະຄອນຫຼວງວຽງຈັນ; ຮັບຟັງການລາຍງານຂອງພະແນກຍຸຕິທຳ ນະຄອນຫຼວງ ກ່ຽວກັບສາເຫດຂອງການປະຕິບັດຄຳຕັດສິນຊັກຊ້າ ແລະ ມາດຕະການ, ວິທີການແກ້ໄຂຂໍ້ຄົງຄ້າງ ຮອດທ້າຍປີ 2023 ຕິດພັນກັບການລາຍງານການທ້ອນໂຮມຊັບ, ວັດຖຸສິ່ງຂອງ ແລະ ຄ່າປັບໃໝຕາມຄຳຕັດສິນຂອງສານ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 6 ເດືອນ ຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II; ດຳເນີນການປະເມີນກາງສະໄໝ ການປະຕິບັດໜ້າທີ່ຂອງບຸກຄະລາກອນ ທີ່ສະພາປະຊາຊົນນະຄອນຫຼວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ແລະ ຮັບຟັງການລາຍງານ ແລະ ຊີ້ແຈງຂອງອົງການປົກຄອງ ຕໍ່ບາງບັນຫາສຳຄັນສຳຄັນ ແລະ ພົ້ນເດັ່ນຂອງນະຄອນຫຼວງ ຈຳນວນໜຶ່ງ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດໂຄງການສຳປະທານ ແລະ ລາຍຮັບຈາກການສຳປະທານທີ່ດິນ ຢູ່ນະຄອນຫຼວງ, ການຄຸ້ມຄອງທີ່ດິນ, ການປ່ຽນແປງສິດນຳໃຊ້ທີ່ດິນ ຫຼື ການຫັ້ນປ່ຽນທີ່ດິນ ໃນນະຄອນຫຼວງວຽງຈັນ, ການຕິດຕາມກວດກາ ແລະ ການແກ້ໄຂບັນຫາການຈັດສັນ, ບຸກລຸກ ແລະ ບຽດຍຶດທີ່ດິນ ທີ່ບໍ່ສອດຄ່ອງກັບກົດໝາຍທີ່ດິນ ໃນຂອບເຂດໃນນະຄອນຫຼວງວຽງຈັນ, ການແກ້ໄຂໜີ້ສິນຂອງນະຄອນຫຼວງວຽງຈັນ,ການຄຸ້ມຄອງການຂຸດຄົ້ນແຮ່ທາດໃນນະຄອນຫຼວງວຽງຈັນ, ການແກ້ໄຂບັນຫາໄຟໄໝ້ລາມປ່າຢູ່ນະຄອນຫຼວງວຽງຈັນ, ວິທີການແລະ ມາດຕະການໃນການຕ້ານແລ້ງ-ຕ້ານຖ້ວມ ຢູ່ນະຄອນຫຼວງວຽງຈັນ, ການຄຸ້ມຄອງຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການ ທີ່ເປັນຊາວຕ່າງປະເທດ ໃນນະຄອນຫຼວງວຽງຈັນ.

ກອງປະຊຸມຍັງຈະໄດ້ຮັບຟັງການຊີ້ແຈງບາງບັນຫາທີ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ຊັກຖາມໃນກອງປະຊຸມຈາກພາກສ່ວນທີ່ກ່ຽວຂ້ອງຕື່ມອີກ.

ການດຳເນີນກອງປະຊຸມຄັ້ງນີ້ ແມ່ນການປະຕິບັດພາລະບົດບາດຂອງສະພາປະຊາຊົນໃນຖານະເປັນອົງການອຳນາດລັດ ຂັ້ນນະຄອນຫຼວງ ທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນຊາວນະຄອນຫຼວງວຽງຈັນ ດັ່ງນັ້ນ, ຈຶ່ງຂໍເຊີນຊວນບັນດາອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງສັງຄົມທຸກພາກສ່ວນ, ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ໂດຍສະເພາະຊາວນະຄອນຫຼວງວຽງຈັນ ຈົ່ງໃຫ້ການຕິດຕາມຂ່າວສານທາງໂທລະພາບ, ວິທະຍຸກະຈາຍສຽງ, ສື່ສິ່ງພິມຕ່າງໆ ແລະ ສາມາດມີຄຳຄິດຄຳເຫັນ ຫຼື ຄຳສະເໜີເຂົ້າໃນກອງປະຊຸມ ຜ່ານທາງໂທລະສັບສາຍດ່ວນ ໝາຍເລກ 1156 ຫຼື ໝາຍເລກໂທລະສັບ 021 260242 ເຊິ່ງເລີ່ມເປີດຮັບຄຳສະເໜີ, ຄຳຄິດຄຳເຫັນຕໍ່ກອງປະຊຸມ ນັບແຕ່ມື້ຖະແຫຼງເປັນຕົ້ນໄປ.

## ກອງປະຊຸມໃຫຍ່ຄັ້ງທີ III ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ



(ສພຊ) ກອງປະຊຸມໃຫຍ່ຄັ້ງທີ III ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ໄຂຂຶ້ນໃນຕອນບ່າຍວັນທີ 13 ກໍລະກົດ 2023 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຫຼວງນ້ຳທາ ໂດຍການເປັນປະທານຂອງສະຫາຍ ນາງ ຄອນສະຫວັນ ອິນທອງຈັນ ຮອງປະທານສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ; ເຂົ້າຮ່ວມກອງປະຊຸມມີສະຫາຍ ນາງ ອຸ່ນຫຼ້າ ອຽງລໍລາດ ກຳມະການພັກແຂວງ, ເລຂາໜ່ວຍພັກສະພາປະຊາຊົນແຂວງ, ຮອງປະທານສະພາປະຊາຊົນແຂວງ, ມີສະຫາຍ ນາງ ອຳພັນ ສໍແສງອິນ ຮອງປະທານສະຫະພັນແມ່ຍິງແຂວງ, ປະທານກວດກາ, ມີບັນດາສະຫາຍຕາງໜ້າສະຫະພັນແມ່ຍິງແຂວງ, ໜ່ວຍສະພັນແມ່ຍິງອ້ອມຂ້າງແຂວງທີ່ຖືກເຊີນ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ພະແນກຍຸຕິທຳແຂວງ ແລະ ອົງການຈັດຕັ້ງມະຫາຊົນສະພາປະຊາຊົນແຂວງ ຕະຫຼອດຮອດສະມາຊິກສະຫະພັນແມ່ຍິງພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມລວມທັງໝົດ 24 ສະຫາຍ.

ກອງປະຊຸມໄດ້ຮັບຟັງການຜ່ານຂໍ້ຕົກລົງສະບັບເລກທີ 45/ສຍຂ ວ່າດ້ວຍການອະນຸມັດເປີດກອງປະຊຸມໃຫຍ່ຄັ້ງທີ III ສະຫະພັນແມ່ຍິງຂັ້ນຮາກຖານສະພາປະຊາຊົນແຂວງ ປະຈຳປີ 2023; ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານໃນໄລຍະ 5 ປີ ແລະ ທິດທາງແຜນການ 5 ປີ ຕໍ່ໜ້າຂອງສະພັນແມ່ຍິງຂັ້ນຮາກຖານສະພາປະຊາຊົນແຂວງປະຈຳປີ 2023 ເຊິ່ງຕະຫຼອດໄລຍະ 5 ປີຜ່ານມາ ເອື້ອຍນ້ອງແມ່ຍິງພາຍໃນຮາກຖານ ໄດ້ເຄື່ອນໄຫວຕາມພາລະບົດບາດ, ໜ້າທີ່ວິຊາສະເພາະຂອງຕົນສັງກັດຢູ່ບັນດາຂະແໜງຢ່າງຕັ້ງໜ້າ, ບຸກບືນຕໍ່ໜ້າທີ່ວຽກງານທີ່ໄດ້ຖືກມອບໝາຍສຳເລັດຫຼາຍດ້ານ.

ຜູ້ແທນກອງປະຊຸມໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບຢ່າງກົງໄປກົງມາ ເພື່ອເຮັດໃຫ້ບົດສະຫຼຸບມີເນື້ອໃນຄົບຖ້ວນສົມບູນຂຶ້ນກວ່າເກົ່າ; ພ້ອມດຽວກັນ, ຄະນະແມ່ຍິງຊຸດເກົ່າຂຶ້ນຜ່ານບົດສຳຫຼວດການນຳພາລວມພ້ອມລາໜ້າທີ່; ຈາກນັ້ນ, ຕາງໜ້າສະຫະພັນແມ່ຍິງໄດ້ ຜ່ານມາດຖານເງື່ອນໄຂ ແລະ ເປົ້າໝາຍຄະນະຊຸດໃໝ່ຜູ້ສະໝັກ ທັງໝົດ 5 ສະຫາຍ, ເລືອກເອົາ 3 ສະຫາຍ ໂດຍແມ່ນຈັດຕັ້ງສະຫະພັນແມ່ຍິງແຂວງປະກາດຜົນການເລືອກຕັ້ງຢ່າງເປັນທາງການ ແລະ ຄະນະຊຸດໃໝ່ກໍໄດ້ຂຶ້ນຮັບໜ້າທີ່.

ກອງປະຊຸມໄດ້ຮັບຟັງການໂອ້ລົມຂອງສະຫາຍນາງ ອຳພັນ ສໍແສງອິນ ເຊິ່ງທ່ານໄດ້ກ່າວເຖິງຄວາມໝາຍຄວາມສຳຄັນຂອງແມ່ຍິງລາວ ແລະ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ກັບຜົນງານທີ່ຍາດມາໄດ້ ເຊິ່ງສະແດງໃຫ້ເຫັນເຖິງຜົນສຳເລັດຫຼາຍດ້ານ. ນອກນັ້ນ, ໄດ້ເນັ້ນໜັກໃຫ້ແມ່ຍິງຮາກຖານເອົາໃຈໃສ່ສຶກສາຄົ້ນຄວ້າຮ່ຳຮຽນເຊື່ອມຊຶມເອົາກົດລະບຽບແມ່ຍິງລາວ, ໃຫ້ມີຄວາມສາມັກຄີຮັກແພງຊ່ວຍເຫຼືອເຊິ່ງກັນແລະກັນ, ມີສະຕິລະວັງຕົວຕໍ່ປາກົດການຫຍໍ້ທໍ້ໃນສັງຄົມ ພ້ອມທັງຮຽກຮ້ອງໃຫ້ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງຊຸດໃໝ່ ເອົາໃຈໃສ່ນຳພາ-ຊີ້ນຳວຽກງານແມ່ຍິງພາຍໃນໃຫ້ມີຜົນສຳເລັດຍິ່ງໆຂຶ້ນ.

**(ວັນນີ ແຝງບົວວັນ)**

## ຕິດຕາມກວດກາການຈັດຕັ້ງ ໂຄງການກໍ່ສ້າງສູນບໍາບັດດອນກໍາມີ້ ແຂວງໄຊສົມບູນ



(ສພຊ) ຄະນະປະຈຳສະພາປະຊາຊົນແຂວງ ແລະ ສະມາຊິກສະພາປະຊາຊົນແຂວງໄຊສົມບູນ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຢູ່ດອນກຳມີ້ ເມືອງອະນຸວົງ ແຂວງໄຊສົມບູນ ເພື່ອປະຕິບັດຕາມກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາປະຊາຊົນຂັ້ນແຂວງ ແລະ ຕາມມະຕິຮັບຮອງຂອງສະພາປະຊາຊົນແຂວງໄຊສົມບູນ ທີ່ໄດ້ຮັບຮອງເອົາວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂອງແຂວງໄຊສົມບູນ ແລະ ແຜນງົບປະມານຮັບໃຊ້ເຂົ້າໃນວຽກງານດັ່ງກ່າວ; ໃນວັນທີ 13 ກໍລະກົດ 2023 ນຳໂດຍທ່ານ ຄຳພູທອນ ວົງພະຈັນ ຮອງປະທານສະພາປະຊາຊົນແຂວງ ທັງເປັນສະມາຊິກສະພາປະຊາຊົນແຂວງ; ພ້ອມດ້ວຍທ່ານ ນາງ ຄຳຫຼ້າ ທອງສີວອນ ສະມາຊິກສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ, ທ່ານ ສັງຄົມ ສູນດາລາ ສະມາຊິກສະພາປະຊາຊົນແຂວງ, ກຳມະການຂອງຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ ແລະ ວິຊາການຈາກສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນເດືອນຕຸລາ 2022 ໂດຍຜ່ານກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງໄຊສົມບູນ ຊຸດທີ II ກອງປະຊຸມໄດ້ຄົ້ນຄວ້າ ແລະ ພິຈາລະນາຮັບຮອງເອົາວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂອງແຂວງໄຊສົມບູນ ທັງໝົດປະກອບມີ 14 ໜ້າວຽກໃຫຍ່ ລວມມູນຄ່າ 7,4 ຕື້ກວ່າກີບ ໃນນັ້ນ, ໂຄງການກໍ່ສ້າງສູນບຳບັດດອນກຳມີ້ ເຂດອ່າງນ້ຳງຶມ 2 ກໍແມ່ນ 1 ໃນ 14 ໜ້າວຽກໃຫຍ່ ທີ່ໄດ້ຮັບການອະນຸມັດຈາກສະພາປະຊາຊົນແຂວງໄຊສົມບູນໃນເດືອນຕຸລາ 2022 ຈຳນວນເງິນ 2,6 ຕື້ກີບ ເຊິ່ງປະກອບມີ 11 ໜ້າວຽກຍ່ອຍ ຄື: ການດັດປັບໜ້າດິນ, ການກໍ່ສ້າງເຮືອນນອນດັດສ້າງຍິງ, ເຮືອນຄົວດັດສ້າງຍິງ, ຫ້ອງນ້ຳດັດສ້າງຍິງ, ຫ້ອງການ, ເຮືອນນອນ, ເຮືອນຄົວ, ຫ້ອງນ້ຳພະນັກງານ, ອ້ອມຮົ້ວໜາມໜາກຈັບ, ໄຟຟ້າ, ພາຫະນະຂົນສົ່ງ ແລະ ວັດສະດຸ. ປັດຈຸບັນໂຄງການດັ່ງກ່າວ ແມ່ນໄດ້ຈັດຕັ້ງປະຕິບັດໄດ້ສຳເລັດ 41,55% ຂອງໜ້າວຽກຍ່ອຍທັງໝົດລວມເປັນມູນຄ່າ ຈຳນວນ 1 ຕື້ກວ່າກີບ ໜ້າວຽກຍ່ອຍທີ່ຈະຕ້ອງໄດ້ສືບຕໍ່ປະຕິບັດໃຫ້ສຳເລັດ ຍັງ 58,45% ເປັນມູນຄ່າເທົ່າກັບ 1,5 ລ້ານກວ່າກີບ: ຜ່ານການລົງຕິດຕາມກວດກາເຫັນວ່າການຈັດຕັ້ງປະຕິບັດໂຄງການດັ່ງກ່າວແມ່ນມີຄວາມຄືບໜ້າພໍສົມຄວນ ທຽບເປີເຊັນຄວາມຄືບໜ້າຂອງໂຄງການ ແລະ ໄລຍະເວລາທີ່ໄດ້ຮັບການອະນຸມັດງົບປະມານ.

ໂອກາດນີ້, ທ່ານ ຄຳພູທອນ ວົງພະຈັນ ໄດ້ເນັ້ນໜັກຕື່ມ ໃຫ້ຄະນະຮັບຜິດຊອບໂຄງການກໍ່ສ້າງສູນບຳບັດດອນກຳມີ້ ໃຫ້ເອົາໃຈໃສ່ຮີບຮ້ອນຈັດຕັ້ງປະຕິບັດໂຄງການໃຫ້ສຳເລັດຕາມແຜນການ ເພື່ອທີ່ຈະໄດ້ນຳໃຊ້ສູນບຳບັດດັ່ງກ່າວໂດຍໄວ ເພື່ອໃຫ້ສາມາດນຳໃຊ້ສູນດັ່ງກ່າວບຳບັດຜູ້ຕິດຢາເສບຕິດ ປູກຈິດສຳນຶກ, ຊຸກຍູ້ສົ່ງເສີມການສ້າງວຽກເຮັດງານທຳ ແນໃສ່ຜູ້ເຄີຍເສບສິ່ງເສບຕິດທີ່ໄດ້ຮັບການບຳບັດ ຢູ່ດອນກຳມີ້ ໃຫ້ສາມາດຫຼຸດພົ້ນອອກຈາກວົງຈອນຢາເສບຕິດຢ່າງຖາວອນ ບໍ່ກັບຄືນໄປພົວພັນສິ່ງເສບຕິດອີກ ເຮັດໃຫ້ສັງຄົມມີຄວາມສະຫງົບສຸກ ເຮັດໃຫ້ພໍ່ແມ່ປະຊາຊົນມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດໃຫ້ດີຍິ່ງໆຂຶ້ນຕື່ມ.

## ຖະແຫຼງຂ່າວເປີດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຂ ຫົວພັນ

(ສພຊ) ຕອນເຊົ້າວັນທີ 26 ກໍລະກົດ 2023 ທີ່ຫ້ອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດພິທີຖະແຫຼງຂ່າວກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຂ ຫົວພັນ ຊຸດທີ II ໂດຍທ່ານ ຄຳຟອງ ກົ້ວມີໄຊ ເລຂາທິການ ສພຂ ຫົວພັນ ເປັນຜູ້ຖະແຫຼງຂ່າວຕໍ່ສື່ມວນຊົນ ເຊິ່ງທ່ານໃຫ້ຮູ້ວ່າ: ການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງ ສພຂ ຫົວພັນ ຊຸດທີ II ຈະໄດ້ໄຂຂຶ້ນໃນລະຫວ່າງວັນທີ 2-4 ສິງຫາ 2023 ທີ່ຫ້ອງປະຊຸມຫົວພັນ ເຊິ່ງຈະໃຊ້ເວລາດຳເນີນກອງປະຊຸມທັງໝົດ 3 ວັນເຕັມ.

ກອງປະຊຸມສະໄໝສາມັນເທື່ອທີ 5 ຈະໄດ້ຮັບຟັງການລາຍງານ ແລະ ການພິຈາລະນາ, ຮັບຮອງເອົາບັນຫາສຳຄັນຕ່າງໆຂອງແຂວງດັ່ງນີ້:

1. ວຽກງານອົງການປົກຄອງ ແຂວງຫົວພັນ

ຮັບຟັງການລາຍງານຂອງເຈົ້າແຂວງ ກ່ຽວກັບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງອົງການປົກຄອງແຂວງ ເຄິ່ງສະໄໝ (2021-2023) ທິດທາງທ້າຍສະໄໝ (2023-2025) ວຽກງານທີ່ພົ້ນເດັ່ນ 6 ເດືອນຕົ້ນປີ ແລະ ທິດທາງຈຸດສຸມ 6 ເດືອນທ້າຍປີ 2023; ຮັບຟັງການລາຍງານຂອງພະແນກແຜນການ ແລະ ການລົງທຶນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມເຄິ່ງສະໄໝ (2021-2023) ທິດທາງທ້າຍສະໄໝ (2023-2025) ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023; ຮັບຟັງການລາຍງານຂອງພະແນກການເງິນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດເຄິ່ງສະໄໝ (2021-2023) ທິດທາງທ້າຍສະໄໝ (2023-2025) ແລະ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6



ເດືອນຕົ້ນປີແລະທິດທາງແຜນການ 6 ເດືອນທ້າຍປີ 2023; ລາຍງານການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງແຂວງຫົວພັນ; ການລາຍງານຂອງພະແນກພະລັງງານ ແລະ ບໍ່ແຮ່ ກ່ຽວກັບການຄຸ້ມຄອງ, ສຳຫຼວດ, ຂຸດຄົ້ນສົ່ງອອກແຮ່ທາດຂອງແຂວງຫົວພັນ; ການລາຍງານຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ຽວກັບຜົນກະທົບຂອງບັນດາກິດຈະການລົງທຶນເຊົ່າ, ສຳປະທານທີ່ດິນ ແລະ ການຂຸດຄົ້ນແຮ່ທາດຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຢູ່ແຂວງຫົວພັນ.

2. ວຽກງານອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ

ຮັບຟັງການລາຍງານການເຄື່ອນໄຫວວຽກງານເຄິ່ງສະໄໝ (2021-2023) ທິດທາງທ້າຍສະໄໝ (2023-2025) ແລະ ການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023.

3. ວຽກງານ ສພຂ ຫົວພັນ

ຮັບຟັງການລາຍງານການເຄື່ອນໄຫວວຽກງານເຄິ່ງສະໄໝ (2021-2023) ທິດທາງທ້າຍສະໄໝ (2023-2025) ແລະ ການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີແລະທິດທາງແຜນການ 6 ເດືອນທ້າຍປີ 2023.

4. ປະເມີນຄວາມໄວ້ວາງໃຈຕໍ່ການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ ສພຂ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.

ນອກຈາກນີ້, ກອງປະຊຸມຈະໄດ້ຮັບຟັງການອະທິບາຍ, ຊີ້ແຈງແລະຕອບຄຳຊັກຖາມຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ແລະ ພາກສ່ວນກ່ຽວຂ້ອງຈຳນວນໜຶ່ງກ່ຽວກັບວຽກງານຕ່າງໆຂອງອົງການປົກຄອງແຂວງ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນແຂວງຫົວພັນ.

ໃນນາມຕາງໜ້າຄະນະປະຈຳ ສພຂ ຫົວພັນ, ຂໍເຊີນຊວນບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ນັກທຸລະກິດ, ພໍ່ຄ້າຊາວຂາຍ, ພໍ່ແມ່ພີ່ນ້ອງປະຊາຊົນບັນດາເຜົ່າ ແລະ ສື່ມວນຊົນຕ່າງໆໃນທົ່ວແຂວງຫົວພັນ ຈົ່ງໄດ້ຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຂ ຫົວພັນ ເຊິ່ງຈະມີການລາຍງານແຕ່ລະລາຍການຜ່ານສື່ຕ່າງໆ.

ເພື່ອຄວາມສະດວກໃຫ້ແກ່ພະນັກງານ, ພໍ່ແມ່ປະຊາຊົນບັນດາເຜົ່າ ທີ່ມີຄວາມສົນໃຈ, ປະກອບຄຳຄິດຄຳເຫັນ ແລະ ສະເໜີບັນຫາຕ່າງໆ ເຂົ້າມາຍັງສະພາປະຊາຊົນແຂວງ ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຄັ້ງນີ້, ຄະນະເລຂາທິການສະພາປະຊາຊົນແຂວງ ໄດ້ແຕ່ງຕັ້ງໜ່ວຍງານຮັບຜິດຊອບສາຍດ່ວນ ເພື່ອຮັບຄຳຄິດເຫັນ, ຄຳສະເໜີຂອງພໍ່ແມ່ປະຊາຊົນບັນດາເຜົ່າ ທ່ານສາມາດສົ່ງຄຳຄິດເຫັນ ແລະ ຄຳສະເໜີໄປຍັງກອງປະຊຸມໄດ້ຜ່ານໂທລະສັບໝາຍເລກ 064 312 075; ໂທລະສັບບໍ່ເສຍຄ່າໝາຍເລກ 064 156; Facebook ແພນເພສ (ສະພາປະຊາຊົນແຂວງຫົວພັນ); ສົ່ງອີເມວ: sapha8@hotmail.com ແລະ Fax: 064 312 878.

**(ນາງ ປຸ້ຍນິຕາ ເພັງມີໄຊ)**

# ບົດສຳພາດຮອງປະທານສະພາປະຊາຊົນແຂວງຫຼວງນ້ຳທາ

ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສະພາແຫ່ງຊາດ ຊຸດທີ IX ກົມສື່ມວນຊົນຂອງສະພາແຫ່ງຊາດ ຮ່ວມກັບລາຍການ “ຄົ້ນຫາມາເລົ່າ” ໂທລະພາບແຫ່ງຊາດລາວ ໄດ້ຈັດວາລະພິເສດເພື່ອສຳພາດບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໂດຍສະເພາະແມ່ນບັນດາທ່ານປະທານ-ຮອງປະທານສະພາປະຊາຊົນຂັ້ນແຂວງໃນທົ່ວປະເທດ ແລະ ບັນດາທ່ານປະທານ-ຮອງປະທານກຳມາທິການຕ່າງໆພາຍໃນສະພາແຫ່ງຊາດ ເຊິ່ງທ່ານຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ກໍໄດ້ເປີດສາກໃຫ້ການສຳພາດກ່ຽວກັບ 3 ບັນຫາເຄັ່ງຮ້ອນທີ່ ສສຊ ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນໄດ້ຍົກຂຶ້ນມາສົນທະນາໃນໂອກາດສຳພາດຄັ້ງນີ້ແລ້ວ ເຊິ່ງໃນໜັງສືພິມ “ຜູ້ແທນປະຊາຊົນ” ຂອງພວກເຮົາໄດ້ນຳສະເໜີໄປແລ້ວໃນສະບັບທີ 931 ແລະ ໃນບົດນີ້ ພວກເຮົາກໍຈະໄດ້ນຳສະເໜີກ່ຽວກັບການສຳພາດ**ທ່ານ ກົງເພັດ ແກ້ວບົວພາ ສສຊ ປະຈຳເຂດເລືອກຕັ້ງທີ 3 ແຂວງຫຼວງນ້ຳທາ** ທັງເປັນຮອງປະທານສະພາປະຊາຊົນແຂວງຫຼວງນ້ຳທາ ເຊິ່ງທ່ານໄດ້ຍົກໃຫ້ເຫັນບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນພາຍໃນແຂວງຫຼວງນ້ຳທາ 3 ບັນຫາຄື:

1. ບັນຫາຢາເສບຕິດ
2. ບັນຫາການຄ້າມະນຸດ
3. ບັນຫາຂີ້ລັກງັດແງະ



ລາຍລະອຽດທ່ານໃຫ້ຮູ້ວ່າ: ຕະຫຼອດໄລຍະຜ່ານມາ ເຖິງວ່າສະພາບການໃນພາກພື້ນ ແລະ ສາກົນ ມີການຜັນແປຢ່າງໄວວາ ແລະ ສະຫຼັບສັບຊ້ອນ, ສະພາບການພາຍໃນປະເທດ ພົບຄວາມຫຍຸ້ງຍາກຫຼາຍດ້ານ ເປັນຕົ້ນແມ່ນເສດຖະກິດ-ການເງິນ, ເກີດພະຍາດລະບາດ, ຄ່າຂອງຊີບປັບຕົວສູງຂຶ້ນ ໄດ້ສົ່ງຜົນກະທົບທາງກົງ ແລະ ທາງອ້ອມຕໍ່ການສ້າງສາພັດທະນາປະເທດຊາດ ກໍຄືແຂວງຫຼວງນ້ຳທາເວົ້າລວມ ເວົ້າສະເພາະກໍຄືຕໍ່ກັບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງອົງຄະນະພັກແຂວງ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, 2 ວາລະແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນແຂວງ. ພາຍໃຕ້ການນຳພາ-ຊີ້ນຳຂອງຄະນະພັກ-ຄະນະນຳ, ການປະກອບສ່ວນຢ່າງເປັນເຈົ້າການຂອງພະນັກງານນຳພາຄຸ້ມຄອງຂອງແຂວງ ແລະ ພາກສ່ວນກ່ຽວຂ້ອງແຂວງຫຼວງນ້ຳທາ ຈຶ່ງສາມາດຜ່ານຜ່າອຸປະສັກ, ຂໍ້ຫຍຸ້ງຍາກຕ່າງໆ ແລະ ຍາດໄດ້ຜົນສຳເລັດຫຼາຍດ້ານ. ແຕ່ເຖິງແນວໃດກໍຕາມ ກໍຍັງມີສິ່ງທ້າທາຍຈຳນວນໜຶ່ງ ເຊິ່ງເປັນການກີດໜ່ວງຖ່ວງດຶງ ຕໍ່ການສ້າງສາພັດທະນາແຂວງຫຼວງນ້ຳທາ ເປັນຕົ້ນແມ່ນບັນຫາຢາເສບຕິດ, ຂີ້ລັກງັດແງະ, ເກີດອຸບັດເຫດຕາມທ້ອງຖະໜົນ, ບັນຫາການຄ້າມະນຸດ ແລະ ອື່ນໆ ແຕ່ອັນພົ້ນເດັ່ນກວ່າໝູ່ທີ່ສະພາປະຊາຊົນແຂວງຫຼວງນ້ຳທາສາມາດຈັດຕັ້ງປະຕິບັດໄດ້ໃນແຕ່ລະໄລຍະແມ່ນ:

**1) ບັນຫາຢາເສບຕິດ:** ໃນໄລຍະເຄິ່ງສະໄໝຜ່ານມາ ພວກເຮົາສາມາດມ້າງຄະດີກ່ຽວຂ້ອງກັບຢາເສບຕິດ ໄດ້ 227 ລາຍ, ມີຜູ້ຖືກຫາ 282 ຄົນ ຍິງ 34 ຄົນ, ຍຶດຂອງກາງປະເພດຕ່າງໆໄດ້ຄື: ຢາບ້າ 271.873 ເມັດ, ຢາຝິ່ນ 89,23 ກິໂລ, ເຮໂລອິນ 1.3 ກຼາມ, ຢາເຄ 4,01 ກຼາມ, ຢາໄອສ໌ 1,38 ກຼາມ ແລະ ນ້ຳກົດ 9.400 ລິດ;

**2) ບັນຫາການຄ້າມະນຸດ:** ເຫັນວ່າສະພາບການຄ້າມະນຸດຢູ່ແຂວງຫຼວງນ້ຳທາ ມີຫຼາຍກໍລະນີເກີດຂຶ້ນ ພວກກຸ່ມເປົ້າໝາຍໄດ້ໂຄສະນາຜ່ານທາງອອນລາຍ, ໂຄສະນາຜ່ານຄົນຕໍ່ຄົນໂດຍກົງ ໂດຍໃຊ້ຫຼາຍຮູບແບບ, ຫຼາຍເລ່ຫຼ່ຽມ ເຮັດໃຫ້ຊາວໜຸ່ມຍິງ-ຊາຍ ມີຄວາມສົນໃຈ ແລະ ຫຼົງເຊື່ອຕໍ່ການໂຄສະນາ ເປັນຕົ້ນແມ່ນການໄປອອກແຮງງານຢູ່ຕ່າງປະເທດ, ຢູ່ຄາຊີໂນ 3 ຫຼ່ຽມຄຳ ແຂວງບໍ່ແກ້ວ ເຊິ່ງໄດ້ເງິນເດືອນສູງ, ມີຄວາມຕ້ອງການແຮງງານຈຳນວນຫຼາຍ, ວຽກເບົາ ເໝາະແກ່ເພດຍິງຫຼາຍກວ່າ ດັ່ງນັ້ນ, ຈຶ່ງມີການຊັກຊວນກັນໄປຕາມຄຳຕົວະຍົວະ ໂດຍຜູ້ຖືກຫຼອກລວງສ່ວນຫຼາຍແມ່ນຢາກຮູ້, ຢາກເຫັນສິ່ງໃໝ່, ຢາກມີລາຍໄດ້, ຢາກປ່ຽນແປງຊີວິດຂອງຕົນເອງຈາກບ້ານນອກ, ທຸກຍາກ ຢາກເຂົ້າໃນເມືອງ ຫຼື ຢາກໄປຕ່າງປະເທດ ແລະ ຈຳນວນໜຶ່ງຄົນຕ່າງປະເທດກໍຖືກຊັກຊວນ ມາເຮັດວຽກຢູ່ຄາຊີໂນ ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ ເຊິ່ງລັກລອບເຂົ້າມາຕາມເສັ້ນທາງທຳມະຊາດ ໂດຍບໍ່ມີເອກະສານຖືກຕ້ອງຕາມກົດໝາຍ. ຕະຫຼອດໄລຍະ 6 ເດືອນຕົ້ນປີ 2023 ມີຄະດີຄ້າມະນຸດຢູ່ພາຍໃນແຂວງຫຼວງນ້ຳທາ 8 ລາຍ, ຜູ້ຖືກຫາ 13 ຄົນ, ໃນນີ້ມີຄົນຕ່າງປະເທດ 1 ຄົນ, ລັກພາຕົວ 1 ລາຍ, ຜູ້ຖືກຫາ 3 ຄົນ ແລະ ສາມາດສະກັດກັ້ນຊ່ວຍເຫຼືອຜູ້ຖືກເຄາະຮ້າຍໄດ້ 34 ຄົນ ຍິງ 28 ຄົນ, ອາຍຸຕ່ຳກວ່າ 18 ມີ 15 ຄົນ;

**3) ບັນຫາຂີ້ລັກງັດແງະ:** ຕໍ່ກັບບັນຫາລັກຊັບພົນລະເມືອງ ເຊິ່ງສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ເອົາໃຈໃສ່ຕິດຕາມ ແລະ ສົມທົບກັບພາກສ່ວນກ່ຽວຂ້ອງ ໃຫ້ມີການແກ້ໄຂບັນຫາທີ່ຫຍຸ້ງຍາກຂອງປະຊາຊົນ ໂດຍສະເພາະແມ່ນການລັກລົດຈັກ ເຫັນວ່າຍັງເກີດຂຶ້ນຫຼາຍ ເພາະໃນແຕ່ລະວັນ, ແຕ່ລະອາທິດ ມີປະຊາຊົນແຈ້ງຄວາມກັບເຈົ້າໜ້າທີ່ກ່ຽວຂ້ອງນັບມື້ເພີ່ມຂຶ້ນ ຈຶ່ງໄດ້ດຳເນີນການຕິດຕາມກວດກາກຸ່ມເປົ້າໝາຍ ສາມາດຈັບໄດ້ຈຳນວນໜຶ່ງ ປະກອບມີຮ້ານທີ່ຮັບຊື້ມາດັດແປງແລ້ວຂາຍຕໍ່ ມີ 2 ຮ້ານ ພ້ອມຂອງກາງລົດຈັກ 28 ຄັນ ແລະ ຊິ້ນສ່ວນທີ່ມ້າງແລ້ວຈຳນວນໜຶ່ງ (ບໍ່ຮູ້ວ່າແມ່ນຄັນໃດ) ສຳລັບເປົ້າໝາຍທີ່ເຄື່ອນໄຫວລັກຊັບຈຳນວນໜຶ່ງກໍສາມາດຈັບຕົວໄດ້ ແລະ ຈຳນວນໜຶ່ງກໍບໍ່ສາມາດຈັບໄດ້ ຍ້ອນການເຄື່ອນໄຫວຂອງກຸ່ມຄົນດັ່ງກ່າວ ມີລັກສະນະແນບນຽນ ແລະ ລະອຽດອ່ອນທີ່ສຸດ.

ນອກຈາກ 3 ບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນດັ່ງທີ່ກ່າວມານັ້ນແລ້ວ ທ່ານ ກົງເພັດ ແກ້ວບົວລະພາ ໃຫ້ຮູ້ຕື່ມວ່າ ແຂວງຫຼວງນ້ຳທາ ຍັງພົບຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ໄພເງິນເຟີ້, ລາຄານ້ຳມັນ, ຄ່າຂອງຊີບ ຫຼື ເຄື່ອງບໍລິໂພກ-ອຸປະໂພກປັບຕົວສູງຂຶ້ນ, ເກີດພະຍາດລະບາດຕາມລະດູການ, ໄພວ່າງງານ, ໄພແຫ້ງແລ້ງ, ການຜະລິດສິນຄ້າເພື່ອສົ່ງອອກຍັງບໍ່ທັນກວ້າງຂວາງດີເທົ່າທີ່ຄວນ ສ່ວນຫຼາຍແມ່ນຍັງອາໄສການນຳເຂົ້າສິນຄ້າຈາກປະເທດເພື່ອນບ້ານໃກ້ຄຽງ ເຊິ່ງບັນຫາດັ່ງກ່າວນີ້ ໄດ້ສົ່ງຜົນກະທົບໂດຍກົງຕໍ່ການດຳລົງຊີວິດຂອງພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນແຂວງຫຼວງນ້ຳທາ.

ໂອກາດດຽວກັນນີ້, ທ່ານ ກົງເພັດ ແກ້ວບົວລະພາ ໄດ້ສະເໜີບາງທິດທາງເພື່ອແກ້ໄຂບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນດັ່ງກ່າວ ວ່າ:

ຕ້ອງເພີ່ມທະວີນຳເອົາແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ລະບຽບການ, ມະຕິ, ຄຳສັ່ງຕ່າງໆ ໂຄສະນາເຜີຍແຜ່ເຊື່ອມຊຶມດ້ວຍຫຼາຍຮູບການ, ຫຼາຍລະດັບ ໃຫ້ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດປະຊາຊົນລາວບັນດາເຜົ່າ, ຊາວໜຸ່ມຍິງ-ຊາຍພາຍໃນແຂວງ ຮັບຮູ້ເຂົ້າໃຈຢ່າງກວ້າງຂວາງ, ເລິກເຊິ່ງກ່ຽວກັບຜົນຮ້າຍຂອງບັນຫາຢາເສບຕິດ, ຂີ້ລັກງັດແງະ, ການຄ້າມະນຸດ ແລະ ປາກົດການຫຍໍ້ທໍ້ອື່ນໆ. ພ້ອມດຽວກັນນີ້, ກໍຕ້ອງຊຸກຍູ້ສົ່ງເສີມໃຫ້ຊາວໜຸ່ມຍິງ-ຊາຍ ຮຽນຈົບຊັ້ນຕ່າງໆ ໂດຍສະເພາະໃນເມື່ອຮຽນຈົບຊັ້ນມັດທະຍົມຕົ້ນ ຫຼື ມັດທະຍົມປາຍແລ້ວ ຄວນສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ເຂົາເຈົ້າໄດ້ຮຽນຕໍ່ຊັ້ນວິຊາສະເພາະ ໃນຂັ້ນມະຫາວິທະຍາໄລ, ໂຮງຮຽນອະຊີວະສຶກສາ ທັງພາຍໃນ ແລະ ຕ່າງປະເທດ ຕາມເງື່ອນໄຂຕົວຈິງ, ສ້າງໃຫ້ເຂົາເຈົ້າມີວຽກເຮັດງານທຳ, ມີລາຍໄດ້ ບໍ່ຕົກເປັນເຫຍື່ອຂອງການຄ້າມະນຸດ ແລະ ບັນຫາໄພສັງຄົມຕ່າງໆ; ຊຸກຍູ້ສົ່ງເສີມ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍຂອງອົງການອຳນາດລັດຂັ້ນແຂວງ ໃຫ້ເອົາໃຈໃສ່ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍກຳນົດ, ບໍ່ສວຍໃຊ້ຊ່ອງວ່າງຂອງກົດໝາຍ ເພື່ອຜົນປະໂຫຍດໃດໜຶ່ງ; ບັນດາພະແນກການ, ອົງການອຳນາດລັດທຽບເທົ່າພະແນກຂັ້ນແຂວງ ພ້ອມດ້ວຍທຸກພາກ ສ່ວນກ່ຽວຂ້ອງ ຈົ່ງເອົາໃຈໃສ່ຄຸ້ມຄອງຮ້ານແລກປ່ຽນເງິນຕາ, ການຊື້-ຂາຍເປັນສະກຸນເງິນກີບ, ຄຸ້ມຄອງລາຄາສິນຄ້າ ໃຫ້ຢູ່ໃນກອບຂອງນິຕິກຳ ສ້າງເງື່ອນອຳນວຍຄວາມສະດວກ ເປັນຕົ້ນ ແມ່ນການສະໜອງສິນເຊື່ອຂອງບັນດາທະນາຄານພາຍໃນແຂວງໃຫ້ກວ້າງຂວາງ ເພື່ອສົ່ງເສີມປະຊາຊົນ ຊາວກະສິກອນ ດຳເນີນການປູກຝັງ-ລ້ຽງສັດ ຜະລິດເປັນສິນຄ້າ ຮັບປະກັນດ້ານສະບຽງອາຫານສູ່ທ້ອງຕະຫຼາດພາຍໃນໃຫ້ພຽງພໍ ຖ້າເຫຼືອກໍສົ່ງອອກຕ່າງແຂວງ, ຕ່າງປະເທດ ຫຼຸດຜ່ອນການນຳເຂົ້າສິນຄ້າທີ່ບໍ່ຈຳເປັນ ຫັນມາຊົມໃຊ້ສິນຄ້າພາຍໃນໃຫ້ແຂງແຮງ.

ໃນໂອກາດທີ່ໄດ້ໃຫ້ການສຳພາດໃນຄັ້ງນີ້ ທ່ານ ກົງເພັດ ແກ້ວບົວພາ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ຂໍຝາກເຖິງ ພະນັກງານ, ທະຫານ, ຕຳຫຼວດ ຕະຮອດປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດເວົ້າລວມ ເວົ້າສະເພາະ ປະຊາຊົນຊາວແຂວງຫຼວງນ້ຳທາ ທຸກທົ່ວໜ້າ ຈົ່ງເຊື່ອໝັ້ນຕໍ່ການນຳພາ-ຊີ້ນຳຂອງພັກ, ການຄຸ້ມຄອງບໍລິຫານຂອງລັດ, ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ; ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມ, ມີສະຕິລະວັງຕົວຕໍ່ເລ່ຫຼ່ຽມກົນອຸບາຍຂອງກຸ່ມຄົນບໍ່ຫວັງດີ, ເຄື່ອນໄຫວ ແລະ ປະກອບອາຊີບທຳມາຫາກິນຖືກຕ້ອງຕາມລະບຽບກົດໝາຍ, ມີຄວາມສາມັກຄີປອງດອງຊ່ວຍເຫຼືອເຊິ່ງກັນແລະກັນ ພ້ອມພາກັນສ້າງເສດຖະກິດຄອບຄົວປູກຝັງ-ລ້ຽງສັດ, ເຮັດການບໍລິການ ແລະ ອື່ນໆ ຕາມເງື່ອນໄຂທ່າແຮງບົ່ມຊ້ອນຂອງແຕ່ລະຄອບຄົວໃຫ້ແຂງແຮງ, ເພີ່ມທະວີການຊື້-ຂາຍສິນຄ້າເປັນສະກຸນເງິນກີບ ເພື່ອປະກອບສ່ວນເຮັດໃຫ້ເງິນກີບຂອງພວກເຮົາແຂງຂຶ້ນ.



ພາບປະກອບ




# ກົດໝາຍ ວ່າດ້ວຍວິຈິດສິນ

ຕໍ່ຈາກສະບັບກ່ອນ

ສຳລັບຜົນງານດ້ານວິຈິດສິນທີ່ຢູ່ໃນການຄອບຄອງຂອງສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ, ສົມບັດມິ່ງເມືອງ ໃຫ້ຍື່ນຄຳຮ້ອງຂໍຂຶ້ນທະບຽນ ນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 30 ການພິຈາລະນາການຂຶ້ນທະບຽນ**

ພາຍຫຼັງໄດ້ຮັບຄຳຮ້ອງຂໍຂຶ້ນທະບຽນຜົນງານດ້ານວິຈິດສິນແລ້ວ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວທີ່ກ່ຽວຂ້ອງ ຕ້ອງພິຈາລະນາຄຳຮ້ອງດັ່ງກ່າວພາຍໃນເວລາເກົ້າສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ການຂຶ້ນທະບຽນນັ້ນ ໃຫ້ປະຕິບັດຕາມລະບຽບການ ກ່ຽວກັບການຂຶ້ນທະບຽນຜົນງານດ້ານວິຈິດສິນທີ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ວາງອອກ.

**ມາດຕາ 31 ການເກັບຮັກສາເອກະສານຂຶ້ນທະບຽນ**

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ເກັບຮັກສາເອກະສານຂຶ້ນທະບຽນ ກ່ຽວກັບຜົນງານດ້ານວິຈິດສິນ ໂດຍເກັບມ້ຽນໃນຖານຂໍ້ມູນ ຫຼື ຫ້ອງເກັບມ້ຽນໄວ້ສະເພາະ ເພື່ອບໍ່ໃຫ້ຕົກເຮ່ຍເສຍຫາຍ ຫຼື ຖືກທຳລາຍ.

**ມາດຕາ 32 ການປ່ຽນແປງ, ການລຶບລ້າງ ແລະ ການຄັດຄ້ານການຂຶ້ນທະບຽນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຫັນວ່າການຂຶ້ນທະບຽນຜົນງານດ້ານວິຈິດສິນບໍ່ຖືກຕ້ອງ ກໍມີສິດຮ້ອງຂໍຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນຕົນອາໄສຢູ່ ເພື່ອໃຫ້ປ່ຽນແປງ ຫຼື ລຶບລ້າງ. ໃນກໍລະນີຂະແໜງການດັ່ງກ່າວຫາກບໍ່ພິຈາລະນາ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ກໍມີສິດຮ້ອງຂໍຕໍ່ສານປະຊາຊົນ ເພື່ອໃຫ້ປ່ຽນແປງ ຫຼື ລຶບລ້າງການຂຶ້ນທະບຽນດັ່ງກ່າວ.

ສຳລັບການຂຶ້ນທະບຽນທີ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດຂອງຜູ້ອື່ນນັ້ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ ກໍມີສິດຂໍຄັດຄ້ານການຂຶ້ນທະບຽນ ເພື່ອໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາຕາມກົດໝາຍ.

ໃນກໍລະນີຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຫາກເຫັນວ່າການຂຶ້ນທະບຽນຜົນງານດ້ານວິຈິດສິນບໍ່ຖືກຕ້ອງ ກໍມີສິດປ່ຽນແປງ ຫຼື ລຶບລ້າງໄດ້ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນຮູ້ ຫຼື ພົບເຫັນ ເປັນຕົ້ນໄປ.

ການປ່ຽນແປງ, ການລຶບລ້າງ ແລະ ການຄັດຄ້ານ ການຂຶ້ນທະບຽນ ຕ້ອງພິຈາລະນາພາຍໃນເວລາສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ.

**ມາດຕາ 33 ການຈຳລອງແບບ**

ການຈຳລອງແບບ ແມ່ນການສ້າງ ຫຼື ຜະລິດວັດຖຸໃໝ່ດ້ວຍການກ່າຍເອົາ ຂະໜາດ, ຊັດສ່ວນ, ຮູບຊົງ, ຮູບແບບ, ສີສັນ, ການຕົບແຕ່ງ ລວມທັງຈຸດພິເສດອື່ນໃຫ້ຖືກຕ້ອງຕາມແບບຕົ້ນສະບັບ ແລະ ຕ້ອງໃສ່ເຄື່ອງໝາຍຂອງວັດຖຸຈຳລອງນັ້ນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຈຳລອງແບບຜົນງານດ້ານວິຈິດສິນ ຕ້ອງໄດ້ຮັບອະນຸຍາດຈາກ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ລວມທັງເຈົ້າຂອງລິຂະສິດ.

ສຳລັບຮູບແບບ, ຂັ້ນຕອນການອະນຸຍາດ ລວມທັງສິດ ແລະ ພັນທະ ຂອງຜູ້ຈຳລອງແບບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 34 ການສ້າງໃໝ່**

ການສ້າງໃໝ່ ແມ່ນ ການສ້າງຜົນງານດ້ານວິຈິດສິນຂຶ້ນໃໝ່ ໂດຍກ່າຍເອົາຮູບຊົງ, ສັດສ່ວນ, ຮູບແບບ, ສີສັນ, ລວດລາຍ, ຮູບຮ່າງ ລວມທັງລັກສະນະ ແລະ ຈຸດພິເສດອື່ນ ຂອງຜົນງານດ້ານວິຈິດສິນທີ່ມີແລ້ວ ຊຶ່ງຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ສຳລັບການອອກແບບ, ການສ້າງໃໝ່ ສະຖາປັດຕະຍະກຳສິນ ເປັນຕົ້ນ ຕຶກ, ອາຄານ, ອະນຸສາວະລີ, ພະພຸດທະຮູບ, ສິມ, ຫໍແຈກ, ຫໍກອງ, ທາດ, ກຸດຕິ, ປະຕູໂຂງ, ສາລາໂຮງທຳ, ຫໍໄຕ, ຫໍຫຼັກເມືອງ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 35 ການຄົ້ນຄວ້າ, ວິໄຈ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ພາຍໃນ ແລະ ຕ່າງປະເທດ ໄດ້ຮັບການສົ່ງເສີມໃຫ້ດຳເນີນການຄົ້ນຄວ້າ, ວິໄຈ ກ່ຽວກັບວິຈິດສິນ ດ້ວຍນະໂຍບາຍຕ່າງໆ ຕາມກົດໝາຍ.

ການຄົ້ນຄວ້າ, ວິໄຈ ກ່ຽວກັບວິຈິດສິນ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດ ທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຮ່ວມມືກັບຕ່າງປະເທດ ໃນການຄົ້ນຄວ້າ, ວິໄຈ ກ່ຽວກັບວິຈິດສິນ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ຂໍ້ມູນ ແລະ ຜົນ ຂອງການຄົ້ນຄວ້າ, ວິໄຈ ຕ້ອງມອບຕົ້ນສະບັບ ໃຫ້ຂະແໜງການຖະແຫຼງຂ່າວ, ວັດ ທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອເກັບຮັກສາໄວ້ ແລະ ໂຄສະນາ ເຜີຍແຜ່ ຕາມລະບຽບການ.

**ມາດຕາ 36 ການສົ່ງອອກ ເພື່ອການວິໄຈ ແລະ ການວາງສະແດງ**

ການສົ່ງອອກຜົນງານດ້ານວິຈິດສິນ ເພື່ອການວິໄຈ ແລະ ການວາງສະແດງ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ອ່ານຕໍ່ສະບັບໜ້າ

## ປະເມີນຜົນ...

(ຕໍ່ຈາກໜ້າ 4)

ປະຊາຊົນ ແລະ ພະນັກງານໄອຍະການປະຊາຊົນ ແລະ ມາດຕາ 68 ງົບປະມານຂອງອົງການໄອຍະການປະຊາຊົນ.

ນອກຈາກການຜັນຂະຫຍາຍ 3 ມາດຕາ ຕາມທີ່ກົດໝາຍໄດ້ກຳນົດໃຫ້ຜັນຂະຫຍາຍແລ້ວ ກໍຍັງໄດ້ຜັນຂະຫຍາຍມາດຕາອື່ນທີ່ກ່ຽວຂ້ອງກັບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນຕື່ມອີກ 18 ນິຕິກຳ.

ມາດຕາທີ່ກຳນົດໃຫ້ຜັນຂະຫຍາຍ ມີ 8 ມາດຕາ ຄື: ມາດຕາ 83 ສິດທາງດ້ານພື້ນທີ່, ມາດຕາ 156 ຄຳຖະແຫຼງ, ມາດຕາ 172 ລະບຽບການປະຊຸມສານ, ມາດຕາ 205 ຄຳຕັດສິນ, ມາດຕາ 221 ຄຳພິພາກສາຂອງສານຂັ້ນອຸທອນ, ມາດຕາ 230 ຄຳພິພາກສາຂອງສານຂັ້ນລຶບລ້າງ, ມາດຕາ 248 ການຍົກຍ້າຍນັກໂທດ ແລະ ມາດຕາ 256 ການປະຕິບັດຄຳຕັດສິນປະຫານຊີວິດ. ໃນຈຳນວນ 8 ມາດຕາທີ່ກ່າວມານັ້ນ, ມາດຕາທີ່ຕິດພັນກັບພາລະບົດບາດຂອງອົງການໄອຍະການປະຊາຊົນ ມີ 1 ມາດຕາຄື ມາດຕາ 156 ກ່ຽວກັບຄຳຖະແຫຼງ.

ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນເຫັນວ່າມາດຕາທີ່ຄວນປັບປຸງ ມີ 15 ມາດຕາຄື: ມາດຕາ 7 ການປົກປ້ອງ; ມາດຕາ 15 ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນພາກ; ມາດຕາ 18 ວັກ 4 ອົງການໄອຍະການປະຊາຊົນເຂດ; ມາດຕາ 23 ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ; ມາດຕາ 27 ຂໍ້ 6 ລຶບລ້າງຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ທີ່ບໍ່ຖືກຕ້ອງຕາມກົດໝາຍ; ມາດຕາ 31 ຂໍ້ 4 ລຶບລ້າງຄຳສັ່ງບໍ່ຖືກຕ້ອງ ຂອງຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມທີ່ບໍ່ຖືກຕ້ອງຕາມກົດໝາຍ; ມາດຕາ 33 ຂໍ້ 4 ລຶບລ້າງຄຳສັ່ງບໍ່ຖືກຕ້ອງຂອງຫົວໜ້າອົງການໄອຍະການປະຊາຊົນເຂດ; ມາດຕາ 39 ການຕິດຕາມກວດກາທົ່ວໄປ; ມາດຕາ 40 ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນໃນການຕິດຕາມກວດກາທົ່ວໄປ; ມາດຕາ 41 ຜົນບັງຄັບປະຕິບັດນິຕິກຳ ຂອງອົງການໄອຍະການປະຊາຊົນຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ; ມາດຕາ 42 ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ; ມາດຕາ 47 ການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ; ມາດຕາ 49 ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນໃນການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຄະດີອື່ນໆ; ມາດຕາ 51 ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ; ມາດຕາ 52 ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນໃນການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ.

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາທີ່ບໍ່ໄດ້ຈັດຕັ້ງປະຕິບັດ ມີ 1 ມາດຕາຄື: ມາດຕາ 157 ການສັ່ງຟ້ອງຂຶ້ນສານໂດຍກົງ ເຊິ່ງໃນພາກປະຕິບັດຕົວຈິງ ເຫັນວ່າບັນດາອົງການດຳເນີນຄະດີອາຍາ ຍັງບໍ່ທັນຈັດຕັ້ງປະຕິບັດໄດ້.

ມາດຕາທີ່ຄວນປັບປຸງມີ 41 ມາດຕາຄື: ມາດຕາ 12 ການບໍ່ລ່ວງລະເມີດສິດ ແລະ ເສລີພາບຂອງພົນລະເມືອງ; ມາດຕາ 14 ການຮັບປະກັນສິດໃນການຕໍ່ສູ້ຄະດີ; ມາດຕາ 26 ການປະສານສົມທົບ; ມາດຕາ 30 ການເກັບໂຮມ ແລະ ການເກັບຮັກສາຫຼັກຖານທາງດ້ານວັດຖຸ ຫຼື ຂອງກາງຄະດີ; ມາດຕາ 46 ອົງການສືບສວນ-ສອບສວນ; ມາດຕາ 64 ແລະ ມາດຕາ 65 ສິດຂອງຜູ້ຖືກສົງໄສ ແລະ ສິດຂອງຜູ້ຖືກຫາ; ມາດຕາ 71 ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ; ມາດຕາ 74 ຜູ້ແປພາສາ; ມາດຕາ 77 ຂໍ້ 4 ສິດ ແລະ ໜ້າທີ່ຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ; ມາດຕາ 84 ການເປີດການສືບສວນ-ສອບສວນ; ມາດຕາ 90 ກຳນົດເວລາໃນການພິຈາລະນາຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ; ມາດຕາ 91 ຄຳສັ່ງເປີດການສືບສວນ-ສອບສວນ; ມາດຕາ 93 ຄຳສັ່ງບໍ່ເປີດການສືບສວນ-ສອບສວນ; ມາດຕາ 108 ການຍຶດ ຫຼື ອາຍັດຊັບ, ວັດຖຸສິ່ງຂອງ; ມາດຕາ 110 ກຳນົດເວລາໃນການສືບສວນ-ສອບສວນ; ມາດຕາ 111 ກຳນົດເວລາການກັກຂັງພາງ; ມາດຕາ 121 ການກວດຄົ້ນ; ມາດຕາ 128 ການຍຶດ ຫຼື ອາຍັດຊັບ ທີ່ເປັນປະໂຫຍດໃຫ້ແກ່ການດຳເນີນຄະດີ; ມາດຕາ 139 ການຈັບຕົວ; ມາດຕາ 142 ການກັກຂັງພາງ; ມາດຕາ 143 ການປ່ອຍຕົວພາງ; ມາດຕາ 146 ການໂຈະການສືບສວນ-ສອບສວນ; ມາດຕາ 148 ການຊັດມ້ຽນຄະດີ; ມາດຕາ 149 ການສືບຕໍ່ການສືບສວນ-ສອບສວນຄະດີທີ່ຖືກຊັດມ້ຽນ; ມາດຕາ 150 ການສິ້ນສຸດການສືບສວນ-ສອບສວນ; ມາດຕາ 151 ສິດ ແລະ ໜ້າທີ່ ຂອງອົງການໄອຍະການ; ມາດຕາ 152 ກຳນົດເວລາໃນການຄົ້ນຄວ້າຄະດີ ແລະ ລົງຄຳເຫັນ; ມາດຕາ 154 ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ; ມາດຕາ 157 ການສັ່ງຟ້ອງຂຶ້ນສານໂດຍກົງ; ມາດຕາ 158 ເງື່ອນໄຂການສັ່ງຟ້ອງຂຶ້ນສານໂດຍກົງ; ມາດຕາ 174 ການເຂົ້າຮ່ວມຂອງຫົວໜ້າອົງການໄອຍະການ; ພາກທີ VIII, ໝວດທີ 5 ການໄຕ່ສວນໃນທີ່ປະຊຸມສານ; ມາດຕາ 201; ມາດຕາ 202; ມາດຕາ 203 ການໂຕ້ຖຽງໃນທີ່ປະຊຸມສານ; ມາດຕາ 209 ການປ່ອຍຕົວຈຳເລີຍ; ມາດຕາ 220 ຂອບເຂດສິດໃນການພິຈາລະນາຄະດີຂັ້ນອຸທອນ; ມາດຕາ 239 ວິທີການຈັດຕັ້ງປະຕິບັດການປ່ອຍຕົວນັກໂທດ; ມາດຕາ 246 ການປະຕິບັດໂທດປັບໃໝ ແລະ ການໃຊ້ແທນຄ່າເສຍຫາຍ; ມາດຕາ 259 ການສະເໜີຮື້ຟື້ນຄະດີ; ມາດຕາ 261 ກຳນົດເວລາໃນການຮື້ຟື້ນຄະດີ.

ຂໍ້ສະເໜີ:

- ສະເໜີປັບປຸງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
- ສະເໜີສ້າງກົດໝາຍວ່າດ້ວຍພະນັກງານໄອຍະການປະຊາຊົນ, ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ທີ່ຈຳເປັນເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດກົດໝາຍທັງສອງສະບັບດັ່ງກ່າວໃຫ້ໄດ້ຮັບຜົນດີ;
- ສະໜີເພີ່ມງົບປະມານ ແລະ ໂກຕາພະນັກງານ-ລັດຖະກອນ ເພື່ອຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ແລະ ອົງການດຳເນີນຄະດີອາຍາຕາມກົດໝາຍ.




# ຄຳສອນໃນຜະຫຍາ

# ດົ້ນກົບເມກ

ເລື່ອງຜະຫຍານັ້ນ ບັນພະບຸລຸດເຮົາໄດ້ຝາກຂໍ້ຄິດ, ພູມປັນຍາໄວ້ຢ່າງຫຼວງຫຼາຍ ເພາະຄຳວ່າ ຜະຫຍານັ້ນມີຫຼາຍແບບ ມີທັງເວົ້າໂຍກ, ເວົ້າເຢີ້ຍ, ເວົ້າຊັບຊ້ອນໃຫ້ນຳເອົາມາຄິດພິຈາລະນາ ເພື່ອຢາກສອນຄົນໃນສັງຄົມ; ຜະຫຍາເວົ້າປຽບທຽບຄວາມສຳພັນຂອງມະນຸດ ທາງພຶດຕິກຳຕົວຈິງທີ່ເກີດຂຶ້ນໃນສັງຄົມເຊັ່ນ: ກວາງກິນໝາກຂາມປ້ອມ ໄປຄາກົ້ນຂີ້ມັ່ງ ບາດວ່າມັ່ງບໍ່ຂີ້ ສາມມື້ກະຕ່າຍຕາຍ...

ຜະຫຍາບົດຂ້າງເທິງນີ້ ເປັນການເວົ້າຍົກໃຫ້ເຫັນພຶດຕິກຳຕົວຈິງຂອງຄົນໃນສັງຄົມ ທີ່ສ້າງບັນຫາໃຫ້ເກີດຂຶ້ນ ພົວພັນລຸກລາມໃຫ້ສັບສົນ, ຊ້ອນເງື່ອນກະທົບໃສ່ວົງກວ້າງ, ຜູ້ກະທຳເຫດ, ຜູ້ໄດ້ຮັບຜົນກະທົບທີ່ສະທ້ອນໃສ່ທຸກຄົນແວດລ້ອມກວາງເປັນຜູ້ສ້າງເຫດ (ກໍ່ເຫດ) ແຕ່ວ່າມັ່ງໄດ້ຮັບຜົນກະທົບ ແລະ ກະຕ່າຍ ກໍເປັນຜູ້ໄດ້ຮັບຜົນສະທ້ອນຕາມມາ ຈາກຕົ້ນເຫດທີ່ກວາງສ້າງຂຶ້ນ ເຊິ່ງປຽບໄດ້ກັບສັງຄົມມະນຸດ ຖ້າວ່າມີບຸກຄົນໜຶ່ງເປັນຜູ້ຢູ່ເບື້ອງຫຼັງມີອຳນາດສັ່ງການ ຫຼື ລະເມີດລະບຽບກົດໝາຍ ແລ້ວມີພັກພວກບໍລິວານເປັນຜູ້ປະຕິບັດຕາມ ແຕ່ຜູ້ໄດ້ຮັບຜົນທະທົບສູນເສຍປະໂຫຍດຄືຄົນໃນສັງຄົມ...

ບົດຜະຫຍາຂ້າງເທິງນັ້ນ ຄືງບໍ່ຕ່າງກັບບົດຜະຫຍາທີ່ເວົ້າວ່າ: ..ໄຟລາມໄໝ້ ຂອນໄຮແຖມຂອນດອກ ຂອນພອກມີບໍ່ແພ້ ສັງມາໄໝ້ແກ່ນຂະຍູງ... ເຮົາສາມາດຕີລາຄາໄດ້ວ່າ: ບັນຫາທີ່ເກີດຂຶ້ນຂອງໄຟໄໝ້ທີ່ຄວນຈະໄໝ້ຂອນໄຮ ຂອນດອກ, ຂອນພອກທີ່ເປັນປະເພດໄມ້ອ່ອນຕິດໄຟງ່າຍ ແຕ່ໄປໄໝ້ແກ່ນຂະຍູງ ເພາະບາງພຶດຕິກຳ ຖ້າວ່າຜູ້ກໍ່ເຫດມີຫຼັງອີງລ້ານ (ມີຜູ້ຖືຫາງໃຫ້ທ້າຍ) ຍ່ອມບໍ່ໄດ້ຮັບຜົນກະທົບ... ແຕ່ຄົນອື່ນຈະໄດ້ຮັບຜົນກະທົບແທນ ບັນຫາຈຶ່ງຊ້ອນເງື່ອນສັບສົນວຸ້ນວາຍທີ່ເກີດໃນພຶດຕິກຳຕົວຈິງຂອງຄົນໃນສັງຄົມ.

ບົດຮຽນ, ຄະຕິພູມປັນຍາຈາກບົດຜະຫຍານັ້ນ ມັນສອນຄົນໄດ້ດີເລີກເຊິ່ງ ເຖິງວ່າເວົ້າສັ້ນແຕ່ມັນກໍສະທ້ອນພຶດຕິກຳຕົວຈິງໄດ້ ປຽບດັ່ງຄຳເວົ້າທີ່ວ່າ ຄົນລວຍບໍ່ໄດ້ເຂົ້າຄຸກ ຄົນທຸກບໍ່ໄດ້ເຂົ້າໂຮງໝໍ ເຊິ່ງຈຸດໝາຍເພື່ອສະທ້ອນພາບຂອງສັງຄົມ ເບີ່ງໃຫ້ເຫັນບັນຫາໂຕຈິງ ເຊິ່ງຂຶ້ນຢູ່ກັບພູມປັນຍາຜູ້ອ່ານຈະເຂົ້າໃຈເລິກພຽງໃດ?



## ຂຽນຄຳລາວໃຫ້ຖືກ

#ຄູແສງ

ການໃຊ້ຄຳ ທີ່ມີອັກສອນຄູ່ ອັນປະກອບດ້ວຍໝວດອັກສອນສູງ ແລະ ອັກສອນຕ່ຳ ທີ່ມີວັນນະຍຸດເອກ x່

**ໝາຍເຫດ:** 'ສ່ວງ'ສະກົດໄດ້ອີກຢ່າງໜຶ່ງເປັນ'ສວ່າງ'.ແຕ່ໃນພາສາເວົ້າມັກອອກສຽງເປັນ'ສ່ວງ'.

| ອັກສອນສູງ | ອັກສອນຕ່ຳ |
|---|---|
| **ໃສ່** : ເອົາໃຈໃສ່ | **ໃຊ່** : ບໍ່ໃຊ່ວ່າ |
| **ສ່ວງ** : ສ່ວງເຊົາ | **ຊ່ວງ** : ຊ່ວງເສົາ |
| **ຜໍ່** : ຜໍ່ເຫັບ, ຍຸ້ງນຜໍ່ | **ພໍ່** : ພໍ່ແມ່ |
| **ເຫື່ອ** : ເຫື່ອແຮງ | **ເຮື່ອ** : ແດງເຮື່ອ |
| **ຫ່ຽວ** : ຫ່ຽວແຫ້ງ | **ຮ່ຽວ** : ປ່າຮ່ຽວ (ປ່າຊ້າ) |
| **ໜ່າຍ** : ເບັນຕາໜ່າຍ | **ນ່າຍ** : ນ່ວຍນ່າຍ |
| **ໜຸ່ມ** : ຊາວໜຸ່ມ | **ນຸ່ມ** : ເໜັງນຸ່ມໆ |
| **ຫຍ່ອນ** : ທຸກຫຍ່ອນຫຍ້າ | **ຍ່ອນ** : ໄຟຍ່ອນຮ້ອນ |

# ບຸນເຂົ້າພັນສາ

ຮຽບຮຽງໂດຍ: ທິດຕາ



ບຸນເຂົ້າພັນສາ ຫຼື ວັນເຂົ້າພັນສາ ກົງກັບມື້ຂຶ້ນ 1 ຄ່ຳເດືອນ 8 ເປັນວັນສຳຄັນທາງພຸດທະສາສະໜາ ນັ້ນຄືວັນເຂົ້າພັນສາ ເຊິ່ງເປັນວັນທີ່ພະສົງເຖຣາວາດ ຈະພັກປະຈຳຢູ່ທີ່ໃດທີ່ໜຶ່ງຕະຫຼອດໄລຍະເວລາລະດູຝົນທີ່ມີກຳນົດເວລາເປັນ 3 ເດືອນ (ໜຶ່ງໄຕຣມາດ) ຕາມທີ່ພະທຳວິໄນບັນຍັດໄວ້ ໂດຍບໍ່ໄປຄ້າງແຮມຢູ່ບ່ອນອື່ນ ຫຼື ທີ່ຮຽກກັນຕິດປາກວ່າ ຈຳພັນສານັ້ນເອງ; ເຂົ້າພັນສາ ແປວ່າ ພັກຝົນ ໝາຍເຖິງພະສົງສາມະເນນຕ້ອງຢູ່ປະຈຳໃນວັດໃດວັດໜຶ່ງໃນລະດູຝົນ ຄືເລີ່ມຕັ້ງແຕ່ຂຶ້ນ 1 ຄ່ຳເດືອນ 8 ຮຽກວ່າ "ປຸຣິມພັນສາ" ຖ້າປີໃດມີ 8 ສອງຄັ້ງ (8 ສອງຫົນ) ກໍເລື່ອນມາເປັນວັນແຮມ 1 ຄ່ຳເດືອນແປດຫຼັງ ແລະ ອອກພັນສາໃນມື້ຂຶ້ນ 15 ຄ່ຳເດືອນ 11 ຮຽກວ່າ ປັດສິມພັນສາ ເວັ້ນແຕ່ມີກິດທຸລະຈຳເປັນຄື: ເມື່ອເດີນທາງໄປທີ່ໃດໜຶ່ງແລ້ວບໍ່ສາມາດເດີນທາງກັບຄືນໄດ້ໃນມື້ນັ້ນ ກໍຊົງອະນຸຍາດໃຫ້ໄປແຮມຄືນ (ຄ້າງຄືນ) ໄດ້ ຄັ້ງໜຶ່ງບໍ່ໃຫ້ກາຍ 7 ຄືນ ຫາກເກີນກຳນົດນີ້ຖືວ່າບໍ່ໄດ້ຮັບຜົນປະໂຫຍດແຫ່ງການຈຳພັນສາ ຫຼື ເອີ້ນວ່າ: ພັນສາຂາດ.

ສຳລັບຂໍ້ຍົກເວັ້ນ ໃຫ້ພິກຂຸຈຳພັນສາບ່ອນອື່ນ ໂດຍບໍ່ຖືວ່າເປັນການຂາດພັນສາ ເວັ້ນແຕ່ເກີນ 7 ວັນໄດ້ແກ່:

1. ການໄປຮັກສາພະຍາບານພິກຂຸ ຫຼື ບິດາມານດາທີ່ເຈັບປ່ວຍ;

2. ການໄປລະງັບພິກຂຸສາມະເນນທີ່ຢາກສິກບໍ່ໃຫ້ສິກໄດ້;

3. ການໄປເພື່ອກິດທຸລະຂອງຄະນະສົງເຊັ່ນ: ການໄປຫາອຸປະກອນມາສ້ອມກຸດຕິທີ່ຊຳຫຼຸດເປ່ເພ;

4. ຫາກອອກຕົນຍາດໂຍມນິມົນໄປທຳບຸນ ກໍໄປສະຫຼອງສັດທາໃນການບຳເພັນກຸສົນຂອງເຂົາໄດ້;

ນອກຈາກນີ້, ຫາກລະຫວ່າງການເດີນທາງກົງກັບວັນຍຸດເຂົ້າພັນສາພໍດີ ພະພິກຂຸສົງເຂົ້າມາທັນໃນໝູ່ບ້ານ ຫຼື ໃນເມືອງກໍພໍຈະຫາທີ່ພັກອາໄສໄດ້ຕາມສົມຄວນ ແຕ່ຖ້າມາບໍ່ທັນກໍຕ້ອງອາໄສເຫງົ້າໄມ້ໃຫຍ່ເປັນທີ່ພັກແຮມ ຊາວບ້ານເຫັນພະໄດ້ຮັບຄວາມລຳບາກເຊັ່ນນີ້ ຈຶ່ງຊ່ວຍກັນປຸກຕູບ ເພື່ອໃຫ້ທ່ານໄດ້ອາໄສພັກຝົນຮ່ວມກັນຫຼາຍໆອົງ ທີ່ພັກດັ່ງກ່າວນີ້ຮຽກວ່າ ວິຫານ ແປວ່າທີ່ຢູ່ຂອງສົງ.

ໂດຍປົກກະຕິ ເຄື່ອງໃຊ້ສອຍຂອງພະ ຕາມພຸດທານຸຍາດໃຫ້ມີປະຈຳຕົວນັ້ນ ມີພຽງອັດຖະບໍລິຂານອັນໄດ້ແກ່ ຜ້າສະບົງ, ຈີວອນ (ຜ້າຄຸມ), ສັງຄາຕິ (ຜ້າສັງຄາ), ເຂັມ, ບາດ ສາຍປະຄົດ (ສາຍຮັດມັດແອວ), ໝໍ້ຕອງນ້ຳ ແລະ ມີດໂກນ ແລະ ຜ້າອ້າບນ້ຳຝົນ ສຳລັບໃຫ້ທ່ານຜັດປ່ຽນ ແລະ ຂອງຈຳເປັນໃນກິດປະຈຳວັນຂອງທ່ານ; ຢ່າງໃດກໍຕາມ ເຖິງແມ່ນວ່າການເຂົ້າພັນສາ ເປັນເລື່ອງຂອງພະພິກຂຸ ແຕ່ພຸດທະສາສະນິກະຊົນກໍຖືເປັນໂອກາດດີທີ່ຈະໄດ້ທຳບຸນຮັກສາສິນ ແລະ ຊຳລະຈິດໃຈໃຫ້ຜ່ອງໃສ ກ່ອນວັນເຂົ້າພັນສາຊາວບ້ານກໍຈະໄປຊ່ວຍພະທຳຄວາມສະອາດເສນາຊະນະ, ສ້ອມແຊມກຸດຕິວິຫານ ແລະ ອື່ນໆ ພໍເຖິງວັນເຂົ້າພັນສາກໍຈະໄປຮ່ວມທຳບຸນຕັກບາດຖວາຍເຄື່ອງສັກກາລະບູຊາ ດອກໄມ້ທູບທຽນ ແລະ ເຄື່ອງໃຊ້ເຊັ່ນ: ສະບູ່, ຢາຖູແຂ້ວ..... ພ້ອມຟັງເທດຟັງທຳ ແລະ ຮັກສາອຸໂປສົດສິນຮ່ວມກັນຢູ່ວັດບາງຄົນອາດຕັ້ງໃຈງົດເວັ້ນອະບາຍຍະມຸກຕ່າງໆ ເປັນກໍລະນີພິເສດ ເຊັ່ນ: ງົດເສບສຸລາ, ງົດຂ້າສັດເປັນຕົ້ນ ອີກອັນໜຶ່ງບິດາມານດາມັກຈະອຸປະສົມບົດ (ບວດ) ໃຫ້ລູກຫຼານຂອງຕົນ ໂດຍຖືກັນວ່າການເຂົ້າບວດຮຽນ ແລະ ຈຳພັນສາ ໃນລະຫວ່າງນີ້ ຈະໄດ້ຮັບອານິສົງຢ່າງສູງ; ນອກຈາກນີ້, ຍັງມີປະເພນີໜຶ່ງທີ່ຂາດບໍ່ໄດ້ ຄືປະເພນີການຫຼໍ່ທຽນເຂົ້າພັນສາ ເຊິ່ງເປັນປະເພນີທີ່ສືບທອດມາແຕ່ບູຮານນະການ ໃນໄລຍະເຂົ້າພັນສາ ພະພິກຂຸຈະຕ້ອງມີການໄຫວ້ພະສູດມົນທຸກເຊົ້າ-ແລງ ແລະ ຈະຕ້ອງມີທູບທຽນບູຊາພ້ອມ ພຸດທະສາສະນິກກະຊົນຈຶ່ງພ້ອມໃຈກັນຫຼໍ່ທຽນເຂົ້າພັນສາ ສຳລັບໃຫ້ພະພິກຂຸຈູດບູຊາ ເປັນການກຸສົນລະທານຢ່າງໜຶ່ງ ເພາະເຊື່ອກັນວ່າໃນການໃຫ້ທານດ້ວຍແສງສະຫວ່າງຈະມີອານິສົງເພີ່ມພູນປັນຍາຫູຕາສະຫວ່າງສະໄຫວ; ບາງທ້ອງຖິ່ນການຫຼໍ່ທຽນເຂົ້າພັນສາ ໄດ້ເຮັດຢ່າງເປັນຂະບວນຟົດຟື້ນມ່ວນຊື່ນ ເມື່ອຫຼໍ່ສຳເລັດແລ້ວ ກໍຈະມີການແຫ່ແຫນອ້ອມຮອບສິມ (ອຸໂປສົດ) 3 ຮອບ ແລ້ວນຳໄປບູຊາພະ ຕະຫຼອດໄລຍະ 3 ເດືອນ ບາງແຫ່ງກໍມີການປະກວດການຕົບແຕ່ງ ແລະ ແຫ່ຮອບເມືອງດ້ວຍຂະບວນທີ່ສວຍງາມ ໂດຍຖືວ່າເປັນງານປະຈຳປີທີ່ຍິ່ງໃຫຍ່.

ກິດຈະກຳທີ່ປະຕິບັດໃນມື້ເຂົ້າພັນສາມີຄື: ຮ່ວມກັນເຮັດທຽນເຂົ້າພັນສາ, ຖວາຍຜ້າອ້າບນ້ຳຝົນ ແລະ ຈະຕຸປັດໄຈແກ່ພຣະສົງສາມະເນນ, ທຳບຸນຕັກບາດຟັງພະທຳມະເທດສະໜາ ແລະ ຮັກສາອຸໂປສົດສິນ-ອະທິຖານ ຍົກເວັ້ນອະບາຍຍະມຸກຕ່າງໆ ສຳລັບຜູ້ໃຫ້ທານຮັກສາສິນໃນເທສະການເຂົ້າພັນສາ ຈະໄດ້ຜາລະອານິສົງຫຼາຍ ຍ້ອນວ່າພະພິກຂຸຈຳວັດປະຕິບັດທຳ ຜູ້ໃດໄດ້ອຸປະຖາກຮັກສາຈະປະສົບຜົນສຳເລັດ, ຈະເປັນຜູ້ຈະເລີນໃນທາງທຳ ສະນັ້ນ, ຈຶ່ງເອົາຕົນເຂົ້າວັດປະຕິບັດ ເພື່ອຂູດເກົາຈິດໃຈໃຫ້ເປັນຜູ້ຮູ້ໃຫ້ອະໄພ, ບໍ່ຈ່ອງເວນຈ່ອງກຳກັນ ໃຫ້ຮູ້ເທົ່າທັນບັນຫາອາໄສຫຼັກທຳເປັນແສງສະຫວ່າງເບື້ອງທາງໃນການດຳເນີນຊີວິດ ເພື່ອຄວາມຜາສຸກຮົ່ມເຢັນ.



## ສຸຂະພາບທາງໂຮຄາ

# ອາການປາກນອນຫຼັງຈາກກິນເຂົ້າ

#ສາວແອ່ນ



ຫຼັງທ້ອງໜາ ໜັງຕາຍານ ຫຼາຍທ່ານອາດຈະເຄີຍເປັນ ໂດຍສະເພາະຫຼັງຈາກກິນເຂົ້າ ແລ້ວມັກຈະມີອາການປາກນອນ ຍິ່ງເວລາທີ່ຢູ່ໃນຫ້ອງການຫຼັງຈາກກິນອາຫານທ່ຽງ. ມື້ນີ້, ໃນຄໍລຳສຸກສະບາຍຫາຍໂຮຄາ ສະບັບນີ້ ເຮົາມີສາເຫດຂອງອາການດັ່ງກ່າວມານຳສະເໜີ ໃຫ້ແກ່ບັນທ່ານໄດ້ຮັບຮູ້ນຳກັນ.

ອາການປາກນອນຫຼັງຈາກຮັບປະທານອາຫານ ເກີດຈາກຮ່າງກາຍໄດ້ຮັບຄາໂບໄຮເດດເຂົ້າໄປໃນຮ່າງກາຍ ແລ້ວໄປກະຕຸ້ນສະໝອງໃຫ້ໃຊ້ພະລັງງານຫຼາຍຂຶ້ນເພື່ອຍ່ອຍອາຫານ ເມື່ອສະໝອງໃຊ້ພະລັງງານຫຼາຍ ຮ່າງກາຍກໍຈະຫຼຸດການໃຊ້ພະລັງງານໃນສ່ວນອື່ນໆຂອງຮ່າງກາຍ ເຮັດໃຫ້ຮູ້ສຶກອ່ອນເພຍ, ງ່ວງຊຶມ, ເຊື່ອງຊ້າ ແລະ ມຶນໆ; ນອກນັ້ນ, ຍັງມີປັດໄຈທີ່ກ່ຽວຂ້ອງເຊັ່ນ:

- ກິນອາຫານປະເພດຄາໂປໄຮເດດ, ໂປຣຕີນ ແລະ ໄຂມັນຫຼາຍເກີນໄປໃນຕອນທ່ຽງ ອາຫານປະເພດນີ້ ຈະໃຊ້ເວລາດົນໃນການຍ່ອຍ ຮ່າງກາຍຈຶ່ງປ່ອຍອາຊິດອາມິໂນທິບໂຕເຟນ (amino tryptophan) ທີ່ໄດ້ຈາກອາຫານ ເຊິ່ງເປັນການຊ່ວຍຫຼຸດຄວາມຕຶງຄຽດ ເຮັດໃຫ້ເກີດອາການງ້ວງນອນ;
- ພັກຜ່ອນບໍ່ພຽງພໍ;
- ເຮັດວຽກໜັກໃນຕອນເຊົ້າ;
- ສະໝອງອ່ອນເພຍຈາກການເຮັດວຽກໜັກເກີນຂີດຈຳກັດຂອງຮ່າງກາຍ;
- ຮ່າງກາຍນຳເລືອດໄປລ້ຽງສະໝອງໜ້ອຍລົງ ເນື່ອງຈາກຕ້ອງນຳເລືອດໄປລ້ຽງກະເພາະອາຫານໃນຕອນຍ່ອຍ ເພາະອາຫານທີ່ຍ່ອຍຍາກ ຈະໃຊ້ເວລາໃນການຍ່ອຍດົນ ເລືອດຈຶ່ງຖືກນຳໃຊ້ໃນບໍລິເວນນັ້ນ;
- ອົກຊີແຊນໃນເລືອດບໍ່ພຽງພໍ ຫຼື ມີກາສກາກໂບນິກໃນເລືອດຫຼາຍເກີນໄປ ຈຶ່ງພາໃຫ້ເກີດອາການປາກນອນ ເຊິ່ງເປັນກົນໄກການເຮັດວຽກຂອງຮ່າງກາຍ ທີ່ຈະພະຍາຍາມເອົາອົກຊີແຊນເຂົ້າສູ່ກະແສເລືອດໃຫ້ຫຼາຍຂຶ້ນ.
- ກິນຫຼາຍເກີນ ຈະເຮັດໃຫ້ສະໝອງປ່ຽນສານອາຊິດອາມິໂນທິບໂຕເຟນ ໃຫ້ເປັນສານເຊໂຣໂທນິນ (serotonin) ແລະ ເມລາໂທນິນ (melatonin) ຫລື ສານທີ່ກ່ຽວຂ້ອງກັບການປາກນອນ ແລະ ຊ່ວຍໃຫ້ນອນຫຼັບ ອອກມານຳ.

**ຂໍ້ມູນຈາກ:WWW.Sanook.com**




## ອາດ ກະວີລາວ

# ຍິງລາວສາວເດັ່ນ

**ໂດຍ: ລູກທາດສາມປາງ**

❊ ຍິງລາວດັງເດັ່ນກ້າ
ຊື່ສຽງໂດ່ງຂະໂຍງໄກ
ຜິວຜ່ອງພັນເໝືອນແຕ້ມ
ຍາມເມື່ອຫຼິງລໍ່າຈ້ອງ

ລືຊ່າຊານໄຊ
ເກັ່ງງາມຄົນຍ້ອງ
ແນມນຳເກີນຄ່ອງ
ເຫັນນ້ອງຄ່ຽມຄົມ

❊ ມວຍຜົມດຳແຕ່ງເກົ້າ
ເດັ່ນລະໄມແພວພາວ
ສຸດສະເໜຫາຮູ້
ວາຈານວນອິ່ນອ້ອຍ

ສະໄບບ່ຽງແພໄໝ
ນຸ່ງງາມຊິ່ງເອ້
ຍິງລາວດູສະຫງ່າ
ຫວານຈ້ອຍມ່ວນຫູ

❊ ຄວາມຮູ້ສູງສົ່ງພົ້ນ
ເປັນນາຍພັນຫຼາຍຄົນ
ວິຊາການເຕັມຂັ້ນ
ແຂ່ງຊ່ວງຊາຍເລັ່ງດັ້ນ

ທຽມບ່າວຊາຍສະກັນ
ດັ່ງດຽວສະເໝີໜ້າ
ແວວໄວຂັນແຂ່ງ
ຫັນຫ້າວດຸ່ງກາຍ

❊ ວຽກຈັບບາຍກໍ່ສ້າງ
ເປັນການນຳພາພັກ
ຄຽງຂ້າງຊາຍດອມເຂົ້າ
ຍິງຂົນຂວາຍກົ່ນໄງ້

ຫຼາຍຢ່າງຍິງທຳ
ມາກມາຍຍິງພ້ອມ
ໜັກເບົາຊ່ວນຊ່ອຍ
ໃຈກ້າເກັ່ງຫານ

❊ ວຽກເຮືອນຊານຄ່ອງແຄ້ວ
ບໍ່ຂອດຄາເຄືອງຂືນ
ເວົ້າມ່ວນງາມຮອຍຍິ້ມ
ເຫັນແລ້ວຍໍຍິ່ງແທ້

ເຮັດຢູ່ກະທຳກິນ
ຊູ່ອັນເຖິງເຫົ້າ
ຄົນມາຢາມແວ່
ແຍງຍ້ອງວ່າດີ ແທ້ແລ້ວ

❊ ສະຕີລາວເອກອ້າງ
ຮຸ່ງປັນຍາຄົມແຫຼມ
ການສຶກສາໂຫຊັ້ນ
ມີພົບໄຫວກົ່ນກ້າວ

ຍຸກໃໝ່ຮຽນສູງ
ເກັ່ງງານແກມກ້າ
ປະລິນຍາເອກໃຫຍ່
ກຽນກ້ອງວ່ອງໄວ

❊ ຖືວິໄນເຄັ່ງຂໍ້
ງານສຳຄັນຍິ່ງລຸຍ
ຮີດຄອງລາວແຂນຫ້ອຍ
ສືບທຳເປັນທີ່ຈັ້ງ

ວຽກດ່ວນທັນການ
ຕໍ່ເຕີມຕາມຕ້ອຍ
ປະເພນີດູເດັ່ນ
ວາງໄວ້ຫວ່າງໃຈງາມເດ!



## ຟ້າສາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)*

# ສາວຈົ້ມ

❊ **ເດືອນ**ສິງຫາຂອງແຕ່ລະປີ ມີເຫດການສຳຄັນ ທີ່ເປັນວັນປະຫວັດສາດ ຂອງຊາດຢ່າງຫຼວງຫຼາຍ ເຊັ່ນ: **ວັນສື່ມວນຊົນ** ແລະ ການ**ພິມຈຳໜ່າຍ**, ວັນ**ລັດຖະທຳມະນູນ,** ວັນ**ຍຶດອຳນາດ** ແລະ ນອກນັ້ນ ຍັງມີວັນ**ບຸນເຂົ້າພັນສາ** ຫຼາຍພາກສ່ວນຄຶກຄື້ນ ກຽມຮ່ວມໂຮມສະຫຼອງ ຈັດປາຖະກະຖາ ພໍ່ກິດຈະກຳພ້ອມພໍ່ໃຫ້ຄົນຮຸ່ນຫຼັງຮູ້ ວັນສຳຄັນປະຫວັດສາດ ລະນຶກໄວ້ພ່ຳພ້ອມ ປະຫວັດສາດເພື່ອສືບສານ **ຊອບແລ້ວ!**

❊ **ວັນທີ 1 ສິງຫາ** ທີ່ຈະມາເຖິງນີ້ ເປັນວັນ**ບຸນເຂົ້າພັນ**ສາຕາມ**ຮີດ 12 ຄອງ 14** ເຊິ່ງຖືວ່າເປັນບາງບຸນໃຫຍ່ຂອງພະສົງອົງຄະເຈົ້າ ເພື່ອເຂົ້າສູ່ການຈຳພັນສາໃນຊ່ວງລະດູຝົນ ເຊີນທຸກຄົນຮ່ວມສ້າງບຸນໃຫຍ່ເປັນກຸສົນ ພາອະນາຄົດສືບ ຊ່ວງພັນສານີ້ ບໍ່ເມົາມົວຫາມື້ ແນວບໍ່ດີຖອຍຫ່າງ ທຳຄວາມດີສືບສ້າງ ປະດັບເອົ້ຄູ່ກາຍ ພີ່ນ້ອງເອີຍ!

## 🤗 ຊອບຍິ້ມ 🤗

# ແອ່ນຕຸ້ງ

### ໜຶ່ງວັນປານສາມເດືອນ

ທ້າວເອນໄປປຶກສາໝໍ

**ເອນ:** ທ່ານໝໍເອີຍ! ເຮັດແນວໃດຈຶ່ງອາຍຸຍືນ ບອກລັກໜ່ອຍແດ່.

**ທ່ານໝໍ:** ບໍ່ຍາກ! ຢູ່ແຕ່ເຮືອນ ບໍ່ກິນເຫຼົ້າ ບໍ່ສູບຢາ ບໍ່ມີເພດສຳພັນ

**ເອນ:** ຊິໄດ້ຜົນຢູ່ບໍ່ທ່ານໝໍ?

**ທ່ານໝໍ:** ໄດ້ຜົນແນ່ນອນຖ້າປະຕິບັດຕາມບອກ ເພາະຢູ່ມື້ໜຶ່ງສຳສາມ ເດືອນພຸ້ນລະ

**ເອນ:** ເອີ! ຄືຊິແມ່ນຄວາມທ່ານໝໍວ່າ!



## ຄະຕິເຕືອນໃຈ

# ດອກຫຍ້າ

**ທຸກໆຄວາມຜິດພາດ ຈະສອນໃຫ້ເຮົາສະຫຼາດຂຶ້ນ**




## ຂະນະນີ້ - ປັດຈຸບັນ

"ຂະນະນີ້" ແລະ "ປັດຈຸບັນ" ເປັນນາມວະລີທີ່ມີຄວາມໝາຍໃກ້ຄຽງກັນ ແຕ່ບໍ່ແມ່ນອັນດຽວກັນ.

"ຂະນະນີ້" ເປັນນາມວະລີທີ່ປະກອບດ້ວຍຄຳວ່າ "ຂະນະ" ມາຈາກເຄົ້າປາລີ Khaṇa ໝາຍເຖິງ "ຄັ້ງ, ຄາວ, ເວລາ, ຍາມ" ແລະ ນີ້ "ເປັນຄຳປະກອບຄຳນາມບອກຈຸດທີ່ຢູ່ໃກ້ຫຼືໃຫ້ຮູ້ຈຳເພາະ". ເມື່ອສອງຄຳນີ້ປະກອບເຂົ້າກັນເປັນ "ຂະນະນີ້" ກໍໝາຍເຖິງ "ໄລຍະເວລາໃນຕອນນີ້" ເຊັ່ນ

- ຂະນະນີ້ເວລາ 7 ໂມງ.
- ຂະນະນີ້ຂະບວນແຫ່ຜາສາດເຜິ້ງກຳລັງມາຮອດເດີ່ນໜ້າພະທາດຫຼວງ.
- ຂະນະນີ້ ພາຍຸໃຫຍ່ພວມພັດເຂົ້າມາ ເຮັດໃຫ້ຕົ້ນໄມ້ຫຼາຍຕົ້ນລົ້ມລະເນລະນາດ.

"ປັດຈຸບັນນີ້" ເປັນນາມວະລີທີ່ປະກອບດ້ວຍຄຳວ່າ "ປັດຈຸບັນ" ຈາກເຄົ້າປາລີ Paccuppanna (ປັຈຈຸປປັນນະ) ແລ້ວແປງສຽງເປັນລາວວ່າ "ປັດຈຸບັນ" ໝາຍເຖິງ"ເວລາດຽວນີ້,ເວລາລະຫວ່າງອະດີດກັບອະນາຄົດ" ແລະ ນີ້ "ເປັນຄຳປະກອບຄຳນາມບອກຈຸດທີ່ຢູ່ໃກ້ຫຼືໃຫ້ຮູ້ຈຳເພາະ". ເມື່ອສອງຄຳນີ້ປະກອບເຂົ້າກັນເປັນ ປັດຈຸບັນນີ້ ກໍໝາຍເຖິງ "ທຸກວັນນີ້, ຊູ່ມື້ນີ້, ຍຸກນີ້, ສະໄໝນີ້" ເຊັ່ນ

- ປັດຈຸບັນນີ້ ເພິ່ນບໍ່ພາກັນຂີ່ລົດຖີບ ຂີ່ລົດສາມລໍ້ໄປຕະຫຼາດແລ້ວ, ເພິ່ນພາກັນຂີ່ລົດຈັກລົດໃຫຍ່ໄປ.
- ປັດຈຸບັນນີ້ ປາກົດເຫັນມີການປະກາດຂາຍເຄື່ອງຢູ່ທາງສື່ອອນລາຍຢ່າງຫຼວງຫຼາຍ.
- ປັດຈຸບັນນີ້ ການໃຫ້ບໍລິການທາງການເງິນມີການພັດທະນາໃຫ້ກ້າວໜ້າ ແລະ ຫຼາກຫຼາຍຜະລິດຕະພັນຍິ່ງຂຶ້ນ ຊຶ່ງຜູ້ບໍລິໂພກສາມາດເລືອກໄດ້ຕາມຄວາມຕ້ອງການ.




**ສິ່ງທີ່ທົນທີ່ສຸດຄືໜ້າ ສິ່ງທີ່ກ້າທີ່ສຸດຄືໃຈ ສິ່ງທີ່ໄວທີ່ສຸດ ຄືປາກ ສິ່ງທີ່ມາກທີ່ສຸດຄືອາລົມ ສິ່ງທີ່ລົມທີ່ສຸດ ຄືຄຳເວົ້າຄຳຈາ.**

# ການນຳຫວຽດນາມ ຊົມເຊີຍກຳປູເຈຍ ຈັດຕັ້ງສຳເລັດການເລືອກຕັ້ງສະພາແຫ່ງຊາດ ຊຸດທີ VII



ຕາມການລາຍງານໃຫ້ຮູ້ວ່າ: ເນື່ອງໃນໂອກາດການເລືອກຕັ້ງສະພາແຫ່ງຊາດ ຊຸດທີ VII ຂອງກຳປູເຈຍ ໃນວັນທີ 23 ກໍລະກົດ ປະສົບຜົນສຳເລັດຢ່າງຈົບງາມເມື່ອວັນທີ 25 ກໍລະກົດຜ່ານມາ, ທ່ານ ຫງວຽນ ຝູ ຈ້ອງ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ສົ່ງໂທລະເລກຊົມເຊີຍປະທານພັກປະຊາຊົນກຳປູເຈຍ (CPP), ເຖິງສົມເດັດ ເຕໂຈ ຮຸນແຊນ ນາຍົກລັດຖະມົນຕີ ແຫ່ງລາຊະອານາຈັກກຳປູເຈຍ, ທ່ານ ຟ້າມ ມິງ ຈິ໊ງ ນາຍົກລັດຖະມົນຕີ ແຫ່ງ ສສ. ຫວຽດນາມ ໄດ້ສົນທະນາທາງໂທລະສັບຊົມເຊີຍທ່ານ ສົມເດັດ ເຕໂຈ ຮຸນແຊນ ນາຍົກລັດຖະມົນຕີກຳປູເຈຍ, ທ່ານ ເວືອງ ດິ່ງ ເຫວະ ປະທານສະພາແຫ່ງຊາດຫວຽດນາມ ໄດ້ສົ່ງໂທລະເລກຊົມເຊີຍທ່ານ ເຮັງ ຊຳຣິນ ປະທານສະພາແຫ່ງຊາດກຳປູເຈຍ.

ດ້ວຍອາລົມຈິດໃກ້ຊິດສະໜິດສະໜົມ, ທ່ານເລຂາທິການໃຫຍ່ ຫງວຽນ ຝູ ຈ້ອງ ແລະ ບັນດາສະຫາຍການນຳພັກ, ລັດ ຫວຽດນາມ ໄດ້ຊົມເຊີຍກຳປູເຈຍ ຈັດຕັ້ງການເລືອກຕັ້ງສະພາແຫ່ງຊາດ ຊຸດທີ VII ສຳເລັດຜົນ, ພິເສດແມ່ນອັດຕາຜູ້ມີສິດເລືອກຕັ້ງໄປປ່ອນບັດເລືອກຕັ້ງສູງ, ການເລືອກຕັ້ງດຳເນີນໄປດ້ວຍຄວາມປອດໄພ, ເສລີ ແລະ ຍຸຕິທຳ, ສະແດງໃຫ້ເຫັນຄວາມເຊື່ອໝັ້ນຂອງຜູ້ມີສິດເລືອກຕັ້ງກຳປູເຈຍ ທີ່ມີຕໍ່ອະນາຄົດແຫ່ງການພັດທະນາຂອງປະເທດ. ການນຳຫວຽດນາມ ຊົມເຊີຍພັກ CPP ຍາດໄດ້ໄຊຊະນະອັນໃຫຍ່ຫຼວງ ທີ່ການເລືອກຕັ້ງດັ່ງກ່າວ ແລະ ຖືວ່າຜົນການເລືອກຕັ້ງອີກເທື່ອໜຶ່ງ ຢັ້ງຢືນບົດບາດ, ຖານະທີ່ຕັ້ງຂອງ CPP ພາຍໃຕ້ການນຳພາຂອງສົມເດັດ ເຕໂຈ ຮຸນແຊນ ພ້ອມທັງສະແດງຄວາມເຊື່ອໝັ້ນວ່າ ກຳປູເຈຍ ຈະສ້າງຕັ້ງສະພາແຫ່ງຊາດ ແລະ ລັດຖະບານຊຸດໃໝ່ໂດຍໄວ ເພື່ອນຳພາປະຊາຊົນກຳປູເຈຍສືບຕໍ່ສ້າງສາປະເທດ ກຳປູເຈຍ ແຫ່ງສັນຕິພາບ, ສະຖຽນລະພາບ ແລະ ພັດທະນາໃຫ້ຈະເລີນຮຸ່ງເຮືອງ, ມີບົດບາດ ແລະ ຖານະທີ່ຕັ້ງນັບມື້ນັບສູງຂຶ້ນຢູ່ພາກພື້ນ ແລະ ໃນໂລກ.

ກ່ຽວກັບການພົວພັນຫວຽດນາມ-ກຳປູເຈຍ, ທ່ານ ເລຂາທິການໃຫຍ່ ຫງວຽນຝູ ຈ້ອງ ແລະ ບັນດາສະຫາຍການນຳຫວຽດນາມ ສະແດງຄວາມເຊື່ອໝັ້ນວ່າການພົວພັນຖານບ້ານໃກ້ເຮືອນຄຽງອັນດີງາມ, ມິດຕະພາບທີ່ເປັນມູນເຊື້ອ, ການຮ່ວມມືຮອບດ້ານ, ຍືນຍົງຍາວນານລະຫວ່າງຫວຽດນາມ ແລະ ກຳປູເຈຍ ຈະນັບມື້ນັບໄດ້ຮັບການປັບປຸງແລະພັດທະນາຢ່າງແຮງເພື່ອຜົນປະໂຫຍດຂອງປະຊາຊົນສອງປະເທດ, ຕັ້ງໜ້າປະກອບສ່ວນໃຫ້ແກ່ປະຊາຄົມອາຊຽນ, ເພື່ອສັນຕິພາບ, ສະຖຽນລະພາບ, ການຮ່ວມມື ແລະ ພັດທະນາຢູ່ພາກພື້ນ ແລະ ໃນໂລກ.

ເນື່ອງໃນໂອກາດນີ້, ທ່ານ ເລ ຮວ່າຍ ຈຸງ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ແລະ ທ່ານ ບຸ່ຍ ແທັງ ເຊີນ ລັດຖະມົນຕີກະຊວງການຕ່າງປະເທດຫວຽດນາມ ກໍໄດ້ສົ່ງໂທລະເລກຊົມເຊີຍ ທ່ານ ປຣັກ ໂຊຂົນ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງ CPP, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີການຕ່າງປະເທດ ແລະ ຮ່ວມມືສາກົນກຳປູເຈຍ ເຊັ່ນດຽວກັນ.

# IMF ຄາດຄະເນການເຕີບໂຕດ້ານເສດຖະກິດໂລກເພີ່ມຂຶ້ນ ແຕ່ມີຄວາມສ່ຽງທີ່ຈະຊຸດໂຊມລົງ

ເມື່ອວັນທີ 25 ກໍລະກົດນີ້ ມີການລາຍງານໃຫ້ຮູ້ວ່າ: ກອງທຶນເງິນຕາສາກົນ ຫຼື IMF ໄດ້ປັບຕົວເລກຄາດຄະເນການເຕີບໂຕດ້ານເສດຖະກິດໂລກໃນປີ 2023 ໃຫ້ສູງຂຶ້ນຮອດ 3% ເຊິ່ງສູງກວ່າຕົວເລກຄາດຄະເນໃນເດືອນເມສາ 0,2% ໃນຂະນະດຽວກັນ, IMF ເຫັນວ່າ: ເສດຖະກິດໂລກຍັງປະເຊີນໜ້າກັບຄວາມສ່ຽງຫຼາຍຢ່າງທີ່ຈະຊຸດໂຊມລົງ, ການເຕີບໂຕຍັງບໍ່ແຂງແຮງເທື່ອ.

ລາຍງານໃຫ້ຮູ້ຕື່ມວ່າ: ໃນມື້ອັນດຽວກັນ IMF ໄດ້ປະກາດເນື້ອໃນໃໝ່ຂອງບົດລາຍງານຕິດຕາມເບິ່ງເສດຖະກິດໂລກ ໂດຍຄາດວ່າ, ຈັງຫວະການເຕີບໂຕຂອງເສດຖະກິດໂລກຈະຫຼຸດລົງຈາກ 3,5% ຂອງປີກາຍມາເປັນ 3% ໃນປີນີ້. IMF ຍັງຄາດວ່າ, ຈັງຫວະການເຕີບໂຕຂອງເສດຖະກິດໂລກໃນປີ 2024 ຈະຢູ່ໃນລະດັບ 3% ຮັກສາການຄາດຄະເນໃນເມື່ອກ່ອນບໍ່ປ່ຽນແປງ.

# ແອັສປາຍເລືອກຕັ້ງລັດຖະສະພາ

ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ແອັສປາຍ ໄດ້ຈັດການເລືອກຕັ້ງລັດຖະສະພາ ໃນວັນທີ 23 ກໍລະກົດຜ່ານມາ ເຊິ່ງຜູ້ມີສິດປ່ອນບັດເລືອກຕັ້ງທັງໝົດ ປະມານ 37,5 ລ້ານຄົນ ໄດ້ປ່ອນບັດເພື່ອເລືອກຕັ້ງເອົາສະມາຊິກສະພາຕ່ຳ ຈຳນວນ 350 ບ່ອນນັ່ງ ແລະ ສະພາສູງ 208 ບ່ອນນັ່ງ.



ການປ່ອນບັດເລືອກຕັ້ງໄດ້ເລີ່ມຕົ້ນຂຶ້ນໃນເວລາ 9 ໂມງໃນມື້ດຽວກັນ ແລະ ສິ້ນສຸດໃນເວລາ 20 ໂມງ ເຊິ່ງຜົນການນັບຄະແນນສຽງເບື້ອງຕົ້ນທີ່ກະຊວງພາຍໃນແອັສປາຍແຈ້ງໃຫ້ຮູ້ໃນຕອນຮຸ່ງເຊົ້າຂອງວັນທີ 24 ກໍລະກົດ ສະແດງໃຫ້ເຫັນວ່າ: ໃນການເລືອກຕັ້ງລັດຖະສະພາແອັສປາຍຄັ້ງນີ້, ພັກປະຊາຊົນ ເຊິ່ງເປັນພັກການເມືອງຝ່າຍຂວາໄດ້ 136 ບ່ອນນັ່ງໃນສະພາຕ່ຳ ດ້ວຍອັດຕາສ່ວນໄດ້ບັດຄະແນນສຽງ 33,05%, ກາຍເປັນພັກການເມືອງທີ່ໄດ້ບ່ອນນັ່ງຫຼາຍອັນດັບໜຶ່ງໃນສະພາ, ແຕ່ຍັງບໍ່ສາມາດຈັດຕັ້ງຄະນະລັດຖະບານພຽງພັກດຽວໄດ້ ເນື່ອງຈາກຕ້ອງໃຫ້ມີ 176 ບ່ອນນັ່ງ ຕາມອັດຕາສ່ວນເດັດຖານໃນສະພາຕ່ຳ. ສ່ວນພັກກຳມະກອນສັງຄົມ ເຊິ່ງເປັນພັກກຳອຳນາດໃນປັດຈຸບັນ ໄດ້ຄະແນນເປັນອັນດັບສອງ ດ້ວຍອັດຕາສ່ວນໄດ້ບັດຄະແນນ31,7%.

ທ່ານ ອານເບີ ນຸເນສ ເຟຈໍ ປະທານພັກປະຊາຊົນ ໄດ້ກ່າວປາໄສວ່າ: ຕົນຈະດຳເນີນການປຶກສາຫາລືກັບພັກຝ່າຍຕ່າງໆກ່ຽວກັບການຈັດຕັ້ງຄະນະລັດຖະບານໂດຍໄວເທົ່າທີ່ຈະໄວໄດ້.

ແອັສປາຍໄດ້ກຳນົດຈຸດປ່ອນບັດທັງໝົດ 22.000 ກວ່າຈຸດໃນທົ່ວປະເທດ. ນອກນີ້, ອີງຕາມສະຖິຕິຂອງລະບົບໄປສະນີແອັສປາຍ ແຈ້ງໃຫ້ຮູ້ວ່າ: ມີປະຊາຊົນປະມານ 2.470.000 ຄົນ ໄດ້ປ່ອນບັດໂດຍຜ່ານການຝາກບັດທາງໄປສະນີ.




# ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

ເພື່ອຜົນປະໂຫຍດຂອງພັກດັ່ງກ່າວນັ້ນ, ພັກກໍຕ້ອງຍິ່ງຊຸກຊວນສົ່ງເສີມ ແລະ ສັນລະເສີນໃຫ້ຄ່າບຳເນັດແກ່ຄຸນງາມຄວາມດີ ແລະ ຄວາມສາມາດຂອງສະມາຊິກຂອງພັກດັ່ງດຽວກັນ, ຕ້ອງຊ່ວຍໃຫ້ເຂົາເຈົ້າໄດ້ຮ່ຳຮຽນ, ຊ່ວຍເຂົາເຈົ້າໃຫ້ເຮັດວຽກໄດ້ ແລະ ຊ່ວຍເຂົາເຈົ້າດ້ານຊີວິດການເປັນຢູ່ ແລະ ດ້ານປິ່ນປົວໃນເວລາເຈັບປ່ວຍ ຕາມແຕ່ສະພາບການຈະອຳນວຍ. ແນະນຳໃຫ້ເຂົາເຈົ້າຢາກເຮັດວຽກ ແລະ ມ່ວນຊື່ນໃນການເຮັດວຽກ. ລວມຄວາມວ່າ ພະນັກງານແຕ່ລະຄົນ ແລະ ສະມາຊິກຂອງພັກແຕ່ລະຄົນຕ້ອງຮັບໃຊ້ຜົນປະໂຫຍດຂອງພັກໝົດທັງສິ້ນບໍ່ຄວນມີຈຸດປະສົງສ່ວນຕົວຕ່າງຫາກ,ບໍ່ຄວນຮຽກຮ້ອງໃຫ້ພັກເອົາອັນນັ້ນ, ອັນນີ້ໃຫ້ແກ່ຕົນ ເພື່ອຜົນປະໂຫຍດສ່ວນຕົວ. ບໍ່ຄວນຈົ່ມວ່າຕິຕຽນພັກ ວ່າບໍ່ຊ່ວຍຕົນ ຫຼື ບໍ່ຍ້ອງຍໍສັນລະເສີນໃຫ້ຄ່າບຳເນັດແກ່ຕົນ ຕ້ອງຖືວ່າການກະທຳຂອງຕົນນັ້ນ ພັກ ແລະ ປະຊາຊົນຍ່ອມຮູ້ເຫັນຢູ່ສະເໝີ.

ພ້ອມກັນນັ້ນ, ບໍ່ວ່າຈະຢູ່ໃນສະພາບການໃດໆ, ສະມາຊິກພະນັກງານຂອງພັກ ຕ້ອງອອກແຮງຕໍ່ສູ້ເລື້ອຍໆ ອອກແຮງເຮັດວຽກການເລື້ອຍໆອົດທົນຮຽນເພື່ອຍົກລະດັບຄວາມຮູ້ດ້ານວັດທະນະທຳ,ວິທະຍາສາດແລະການເມືອງຂອງຕົນໃຫ້ສູງຂຶ້ນ, ຕ້ອງຮັກສາລະບຽບວິໄນ, ຕ້ອງຕັ້ງຕົວໃຫ້ສົມເປັນພະນັກງານ ແລະ ສະມາຊິກຂອງພັກຢູ່ເລື້ອຍໆ.

ອ່ານຕໍ່ສະບັບໜ້າ...

ເຫັນໄດ້ ໄດ້ຍິນ

❖ ວິເສດ ສະແຫວງສຶກສາ

# ສິ່ງແວດລ້ອມ ສົດໃສຊີວິດປອດໄພ



ໃນແຕ່ລະປີ, ພໍຮອດວັນທີ 5 ມິຖຸນາ ເຊິ່ງຖືກກຳນົດໃຫ້ເປັນວັນສິ່ງແວດລ້ອມໂລກ ພວກເຮົາຕ່າງ ກໍພາກັນເຄື່ອນໄຫວເພື່ອລະລຶກວັນສຳຄັນດັ່ງກ່າວດ້ວຍຫຼາຍຮູບການ. ຂະບວນການເຄື່ອນໄຫວສຳລັບວັນສິ່ງແວດລ້ອມໂລກປະຈຳປີນີ້ນັ້ນ ເນັ້ນການຈຳກັດຂີ້ເຫຍື້ອປະເພດຢາງ ຫຼື ປະລາສະຕິກ ດ້ວຍການປູກຈິດສຳນຶກໃຫ້ຊາວໂລກເຫັນໄດ້ວ່າ ຊີວິດຈະດີຂຶ້ນຖ້າປາສະຈາກຂີ້ເຫຍື້ອຊະນິດນີ້. ແນ່ນອນຂີ້ເຫຍື້ອທຸກປະເພດນັ້ນລ້ວນແຕ່ມີສ່ວນເຮັດໃຫ້ສິ່ງແວດລ້ອມເສື່ອມໂຊມ ແຕ່ທີ່ເນັ້ນເລື່ອງຂີ້ເຫຍື້ອປະລາສະຕິກກໍເພາະວ່າມັນເປັນຂີ້ເຫຍື້ອທີ່ແຜ່ຫຼາຍ ແລະ ລະລາຍຍາກກວ່າຂີ້ເຫຍື້ອຊະນິດອື່ນໆ.

ສຳລັບບົດນີ້ ຂໍສະເໜີບາງບົດຮຽນຈາກ ຍີ່ປຸ່ນ ແລະ ສະຫະພາບເອີຣົບ (EU) ກ່ຽວກັບນະໂຍບາຍ-ມາດຕະການໃນການປົກປັກຮັກສາສິ່ງແວດລ້ອມດ້ວຍມາດຕະການກຳຈັດຂີ້ເຫຍື້ອ ເອເລັກໂຕຣນິກ.

ຈຳໄດ້ວ່າຕົ້ນໆ ສັດຕະວັດນີ້ (ລະຫວ່າງປີ 2001-2002) ທາງການ**ຍີ່ປຸ່ນ** ໄດ້ສ້າງ ແລະ ປະກາດໃຊ້ກົດໝາຍວ່າດ້ວຍການກຳຈັດຂີ້ເຫຍື້ອເອເລັກໂຕຣນິກ ໂດຍຂີ້ເຫຍື້ອຈາກເຄື່ອງຄອມພິວເຕີ, ຕູ້ເຢັນ, ແອເຢັນ, ຈັກຊັກເຄື່ອງ ແລະ ໂທລະສັບມືຖື ເຊິ່ງກາຍເປັນບັນຫາທ້າທາຍຕໍ່ສິ່ງແວດລ້ອມຢ່າງໜັກໜ່ວງ. ຂີ້ເຫຍື້ອເອເລັກໂຕຣນິກ ເຖິງວ່າຈະບໍ່ແຜ່ຫຼາຍເໝືອນຂີ້ເຫຍື້ອປະເພດຢາງ (ປາລາສະຕິກ) ແຕ່ມັນພັດເປັນອັນຕະລາຍສູງ ເພາະມີສ່ວນປະກອບຂອງສານພິດກຳມັນຕະພາບລັງສີ ກົດໝາຍໄດ້ກຳນົດກ່ຽວກັບອາຍຸການໃຊ້ເຄື່ອງເອເລັກໂຕຣນິກທີ່ກ່າວມາຂ້າງເທິງ, ກຳນົດສະຖານທີ່ເກັບມ້ຽນ, ການທຳລາຍຖິ້ມ ແລະ ການແປຮູບເພື່ອນຳໃຊ້ຄືນໃໝ່ (ເອີ້ນວ່າ ຣີໄຊເກີນ). ແລະ ຫວ່າງບໍ່ດົນມານີ້, ທາງ**ສະຫະພາບເອີຣົບ** (EU) ກໍເລີ່ມຕາມຮອຍຍີ່ປຸ່ນ ໄດ້ລິເລີ່ມສ້າງກົດໝາຍເພື່ອຄວບຄຸມຂີ້ເຫຍື້ອເອເລັກໂຕຣນິກ ໂດຍເນັ້ນຂີ້ເຫຍື້ອໂທລະສັບມືຖື ແລະ ແທັບເລັດ. ພາຍໃຕ້ຮ່າງກົດໝາຍທີ່ລັດຖະສະພາເອີຣົບຈະພິຈາລະນາຮັບຮອງເອົາ ແລະ ປະກາດໃນຕໍ່ມານີ້, ຜູ້ປະກອບການຜະລິດສະມາດໂຟນ ແລະ ແທັບເລັດຕ້ອງຊອກຜະລິດຍີ່ຫໍ້ທີ່ທົນທານໃຊ້ງານໄດ້ດົນ, ສາມາດປ່ຽນຖ່າຍຊິ້ນສ່ວນໄດ້ງ່າຍຂຶ້ນ ແລະ ໃຊ້ຮ່ວມກັນໄດ້ຫຼາຍຊະນິດ. ທາງການຂອງ ສະຫະພາບ ເອີຣົບເຊື່ອວ່າຖ້າສາມາດກຳຈັດຂີ້ເຫຍື້ອ ເອເລັກໂຕຣນິກສອງຊະນິດ (ສະມາດໂຟນ-ແທັບເລັດ) ນີ້ໄດ້ກໍຈະຊ່ວຍຫຼຸດຜ່ອນການປ່ອຍກາກບອນໄດ້ເທົ່າກັບ ບໍລິມາດຂອງກາກບອນຈາກລົດໃຫ່ຍຈຳນວນ 5 ລ້ານຄັນ ທີ່ແລ່ນຢູ່ຕາມເສັ້ນທາງ ໃນບັນດາປະເທດສະມາຊິກ EU ໃນປັດຈຸບັນ. ບາງເນື້ອໃນສຳຄັນ ຂອງຮ່າງກົດໝາຍສະບັບນີ້ ລວມມີບົດກຳນົດກ່ຽວກັບການສະໜອງອາໄຫຼ່ (ຊິ້ນສ່ວນ) ຢ່າງໜ້ອຍ 15 ຊະນິດທີ່ຈຳເປັນສຳລັບສະມາດໂຟນ ແລະ ແທັບເລັດຄືໃຫ້ມີຄວາມທົນທານໃນການໃຊ້ງານບໍ່ດັ່ງນັ້ນຈະຖືກຖິ້ມເປັນຂີ້ເຫຍື້ອ. ກົດໝາຍຍັງໄດ້ກຳນົດໃຫ້ບັນດາຮ້ານຄ້າຈຳໜ່າຍສະມາດໂຟນ ແລະ ແທັບເລັດຕ້ອງສະໜອງຊິ້ນສ່ວນໃຫ້ລູກຄ້າພ້ອມບາດໂລດເມື່ອເວລາລູກຄ້າຊື້ເຄື່ອງມືສອງປະເພດນີ້ ຊິ້ນສ່ວນດັ່ງກ່າວ ຕ້ອງມີຈຳນວນພຽງພໍສຳລັບໃຊ້ປ່ຽນຖ່າຍໃນໄລຍະ 5 ປີ. ໃນໄລຍະຜ່ານມາຜູ້ໃຊ້ເຄື່ອງເອເລັກໂຕຣນິກ 2 ປະເພດນີ້ຕ້ອງໄດ້ຖິ້ມເຄື່ອງເປັນຂີ້ເຫຍື້ອພາຍຫຼັງນຳໃຊ້ໃນບໍ່ພໍຄາວ ຍ້ອນຂາດ ຫຼື ຊອກຊື້ຊິ້ນສ່ວນມາປ່ຽນຖ່າຍບໍ່ໄດ້. ຊິ້ນສ່ວນ 15 ຊະນິດທີ່ກົດໝາຍສະບັບນີ້ຄຸ້ມຄອງ ແລະ ຄວບຄຸມນັ້ນລວມມີ: ແບັດເຕີຣີ, ໜ້າຈໍ, ເຄື່ອງສາກ, ຝາຫຼັງ, ກາດຄວາມຈຳ ແລະ ອື່ນໆ.

ວ່າກັນວ່າຂີ້ເຫຍື້ອເອເລັກໂຕຣນິກນີ້ຖ້າສາມາດຣີໄຊເກີນ ຫຼື ແຍກຊິ້ນສ່ວນອອກມານຳໃຊ້ຄືນໃໝ່ກໍຈະໄດ້ປະໂຫຍດຫຼາຍເພາະມີສ່ວນຂອງໂລຫະຊັ້ນດີເຊັ່ນທອງແດງ, ເຫຼັກກ້າ ແລະ ອື່ນໆ.




## ເພື່ອແກ້ປວດຫົວ

#ບ່າວກະບື

ຢູ່ມາມື້ໜຶ່ງ ຊາຍຄົນໜຶ່ງເຂົ້າໄປຮ້ານຂາຍຢາ ແລະ ຖາມຂຶ້ນວ່າ: "ເຈົ້າມີຢາແກ້ປວດຫົວບໍ່?" ເຈົ້າຂອງຮ້ານຈັບເອົາແກ້ວຢາລົງມາຈາກຖ້ານ, ດຶງດອນອອກ ແລ້ວຍື່ນໃສ່ກ້ອງດັງເຂົາ. ກິ່ນຢານັ້ນແຮງຂະໜາດ ຈົນເຮັດໃຫ້ນ້ຳຕາຊາຍຄົນນັ້ນໄຫຼຮວາດແກ້ມລົງມາ.

"ເປັນຫຍັງຈຶ່ງເຮັດແບບນັ້ນໃຫ້ຂ້ອຍ?" ເຂົາເວົ້າດ້ວຍຄວາມໂມໂຫ ຫຼັງຈາກກັ້ນໃຈ.

"ແຕ່ວ່າຢານີ້ ມັນກໍຊ່ວຍໃຫ້ເຈົ້າຫາຍປວດຫົວບໍ່ແມ່ນຫວະ?" ເຈົ້າຂອງຮ້ານເວົ້າຂຶ້ນ

"ເຈົ້າທັ້ງເປັນບ້າ, ເມຍຂ້ອຍພຸ້ນປວດຫົວ ບໍ່ແມ່ນຂ້ອຍ!" ຊາຍຄົນນັ້ນວ່າ.

## TO CURE A HEADACHE

*#BAOKBU*

One day a man went into a drugstore and asked: "Have you anything to cure a headache ?" The owner of the store took a bottle from a shelf, took out the cork and held it under the man's nose.

The smell was so strong that tears came into the man's eyes and ran down his cheeks.

"Why did you do that for me ?" he said angrily. as soon as he could get back his breath.

"But that medicine has cured your headache, hasn't it ? " said the owner.

You fool, "said the man, "It's my wife that has the headache, not me !".

ຍ່ານມ່ວນ ຊວນຍິ້ມ



ຂັບລົດປານຂັບເຮືອ ຍ້ອນຂີ້ເຫຍື້ອຕັນທໍ່ລະບາຍ

● ໂດຍ : ພູຜາ

ທະນາຄານພັດທະນາລາວ LDB Bank

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ LUANG PRABANG POWER COMPANY LIMITED

ອຸດສາຫະກຳ ຈົ່ງຈູ້ 中鉅實業

ຮ້ານຄຳພູວົງ PHOUVONG JEWELRY

SCNG SOMCHAYNEUK GROUP

ຜູ້ຊີ້ນຳ : ທ່ານ ສີງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ : ທ່ານ ສີສຸພັນ ແສງສະຫວັນ, ທ່ານ ວິເສດ ສະແຫວງສຶກສາ, ທ່ານ ທອງດາ ສຸພາສິດ, ທ່ານ ຄຳຫວັນ ດາລາວົງ

ຄະນະບັນນາທິການ : ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ, ທ່ານ ອັນທະວີ ວົງພະຈັນ ຮອງ ບກ, ທ່ານ ເປຄຳ ລໍຄຳສອນ ຮອງ ບກ

ກອງບັນນາທິການ : ນາງ ກົງໃຈ ແສງອຳພັນ, ນາງ ສຸພາວັນ ທອມສະນິດ, ນາງ ປາກາລັກ ພົມມີໄຊ

ອອກແບບ - ຈັດໜ້າ : ນາງ ນິດຕາ ຄຸນປາກດີ